<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມ
ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບ
ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ,
ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1-3
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 4
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 7-9, Easter Lesson
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 7-9 Easter Lesson
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 5, 6, 10-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 5, 6, 10-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດແນະນຳສຳລັບຄຣູສອນ

# ບົດຮຽນທີ 1

# ພຣະຄຣິດ ເປັນເຈົ້າຂອງໃນທຸກສິ່ງ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ ບົດທີ 1

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ພຣະນິມິດ ບົດທີ 1

ຈຸດສຳຄັນຂອງບົດຮຽນນີ້: ເຖິງແມ່ນວ່າຈະມີການຕໍ່ສູ້ຫລາຍປານໃດ ແລະການຂູ່ເຂັນຈະຫນັກຫນ່ວງຫລາຍທໍ່ໃດກໍຕາມ, ຄຣິສຕຽນຕ້ອງມີຄວາມແນ່ນອນໃຈ ວ່າພຣະຄຣິດແມ່ນເຈົ້າຂອງໃນທຸກສິ່ງ, ບໍ່ວ່າໃນປັດຈຸບັນ ແລະໃນອະນາຄົດທີ່ຈະມາເຖິງ.

ຄຳຖາມເພື່ອສຳຣວດ: ແມ່ນຫຍັງຄືສິ່ງທີ່ເຮັດໃຫ້ທ່ານຢ້ານກົວ?

ຈຸດປະສົງຂອງບົດຮຽນ: ເພື່ອຈະສລູບຄວາມຫມາຍທີ່ໂຢຮັນເຫັນນິມິດຫມາຍໃນອົງພຣະຄຣິດ.

## ແຜນການສິດສອນ

## 1. ນຳເຣື່ອງເຂົ້າສູ່ຊີວິດຈິງ

1). "ຢ້ານກົວ" ແມ່ນຄວາມເວົ້າ ທີ່ເຮັດໃຫ້ຄົນອົກສັ່ນຂວັນຫາຍ. ຕົວຢ່າງ:ຢ້ານແມງມຸມ, ຢ້ານກົວນ້ຳເບີ 13. ພວກເຮົາມີການຢ້ານກົວແຕກຕ່າງກັນ. ຖາມ: ໃນຫມູ່ຄົນລາວຂອງພວກເຮົານີ້ ພວກເຮົາມັກຢ້ານອັນໃດຫລາຍກວ່າຫມູ່? (ຂຽນລົງໃນກະດານ)
ຖາມ: ຄົນເຮົາຕໍ່ສູ້ກັບຄວາມຢ້ານກົວນັ້ນຢ່າງໃດ? (ຄຳຕອບ: ອະລ້ານ, ໃສ່ເຊຸກຸຍຣີຕີ້ ຊິສເຕັ້ມ, ອະທິຖານ, ຕ້ອງມີຫມູ່ຕລອດເວລາ.....) ຢູ່ໃນໂລກແຫ່ງຄວາມຢ້ານກົວນີ້, ດີແລ້ວທີ່ພວກເຮົາມີພຣະເຈົ້າທີ່ຮັກເຮົາ ແລະຢາກຈະມອບສັນຕິສຸກໃຫ້ແກ່ເຮົາ ໃນເວລາເຮົາມີຄວາມຢ້ານກົວ (1ໂຢຮັນ 4:18)

## ຂ. ນຳພາສຶກສາພຣະຄັມພີ

2). ໃຊ້ອຸປກອນຈາກຄຳນຳຂອງເຈັ້ຽບົດຮຽນ. ທຳຄວາມເຂົ້າໃຈໃນຂໍ້ພຣະທັມຄັມພີ.
ຖາມ: ມີຜູ້ໃດເຄີຍໄດ້ອ່ານພຣະທັມພຣະນິມິດແດ່ບໍ່? ຖ້າເຄີຍອ່ານພຣະຄັມພີຕອນນີ້ມີຄວາມຫມາຍຄືແນວໃດ? ນີ້ແມ່ນສ່ວນນຶ່ງຂອງຄຳແນະນຳ ພຣະນິມິດ 1:1-3, 9

3). ໃຫ້ຜູ້ນຶ່ງທີ່ສມັກໃຈອ່ານພຣະຄັມພີພຣະນິມິດ 1:4-8. ແລ້ວຖາມຫ້ອງຮຽນທັງຫມົດເປັນປໂຍກ ປໂຍກໄປ. ຫລັງຈາກນັ້ນກໍໃຫ້ອະທິບາຍຢ່າງລະອຽດ

4). ຍົກຄຳທີ່ອະທິບາຍເຖິງພຣະເຢຊູຊົງມີພຣະກຳລັງອອກມາ. ຊ່ວຍນັກຮຽນໃຫ້ຮູ້ວ່າພຣະເຢຊູຊົງຄວບຄຸມໂລກທັງໂລກຢູ່ໃນພຣະຫັດຂອງພຣະອົງ. ຕໍ່ຄຣິສຕະຈັກທີ່ຖືກການຂົ່ມເຫັງ, ພຣະຄຳຕອນນີ້ກໍນຳຄວາມຫວັງມາໃຫ້. ພຣະເຢຊູເປັນຫ່ວງເປັນໃຍຕໍ່ມວນມະນຸດ ແລະພຣະກຳລັງຂອງພຣະອົງກໍພຽງພໍທີ່ຈະຄຸ້ມກັນໄດ້.

5). ອ່ານພຣະນິມິດ 1:9-11. ບັນລະຍາຍ ສິ່ງທີ່ສຳຄັນ "ວັນຂອງພຣະເຈົ້າ" ແລະ ຄຣິສຕະຈັກທັງເຈັດ. ໃຊ້ຄຳອະທິບາຍໃນເຈັ້ຽບົດຮຽນ.

6). ຖ້າເປັນໄປໄດ້, ໃຫ້ນຳຮູບພາບທີ່ມີພຣະເຢຊູຊົງບັນລັງ. ພຣະນິມິດ 1:12-16 ໃຫ້ຄົນນຶ່ງອ່ານ ແລ້ວຄຣູຈະບອກວ່ານີ້ລະຄືຮູບຜູ້ທີ່ເປັນພຣະເຈົ້າຂອງທຸກສິ່ງ.

## 3. <u>ນຳໃຊ້ໃນຊີວິດປະຈຳວັນ</u>

7). ຖ້າການອະທິບາຍຮູບຮ່າງຂອງພຣະເຢຊູຫາກບໍ່ພຽງພໍ ທີ່ຈະຈູງໃຈໃຫ້ພວກເຮົາເຊື່ອໃນພຣະກຳລັງຂອງພຣະອົງ ກໍຂໍໃຫ້ເບິ່ງໃນພຣະຄຳຂອງພຣະອົງ ແລະຟັງພຣະຄຳຂອງພຣະອົງ.

ໃຫ້ຄົນນຶ່ງອີກອ່ານໃນພຣະຄັມພີພຣະນິມິດ 1:17-20. ແລ້ວຖາມວ່າ: ຖ້າໂບດຂອງພວກເຮົາຫລືຫ້ອງຮຽນຂອງພວກເຮົາຫາກປະເຊີນໜ້າກັບການຂົ່ມເຫັງ, ບາງທີອາດຈະເຖິງແກ່ຊີວິດ ຫລືຕິດຄຸກເພາະຄວາມເຊື່ອຖືຂອງພວກເຮົາ, ທ່ານຢາກໄດ້ຍິນຫຍັງແດ່? (ຄຳຕອບ: ຄຳໜູນໃຈ, ຖ້ອຍຄຳແຫ່ງຄວາມຫວັງ) ເນັ້ນເຖິງພຣະຄຳຂອງພຣະເຢຊູ ພຣະອົງຊົງກ່າວວ່າຢ່າງໃດ? (ຂໍ້ 17) "ຢ່າຊູ່ຢ້ານ" ຖາມ: "ເຮົາເປັນຜູ້ຕົ້ນແລະຜູ້ປາຍ" ຄຳເວົ້ານີ້ມີເຫດຜົນຫຍັງທີ່ກ່ຽວກັບວ່າ ຢ່າຊູ່ຢ້ານ. (ໃຫ້ນັກຮຽນໃຫ້ເຫດຜົນ ແຕ່ລະຄົນ)

8). ຖາມນັກຮຽນ ໃນເຈັ້ຽບົດຮຽນ, ໂດຍສະເພາະຂໍ້ 2 ແລະຂໍ້ 4 ຊຶ່ງບອກວ່າພຣະເຢຊູເປັນພຣະເຈົ້າຂອງທຸກສິ່ງ. ອະນາຄົດຈະເປັນຂອງຄົນຂອງພຣະອົງ. (ໃຫ້ນັກຮຽນອະທິບາຍເທື່ອລະຄົນ)

9). ນຳພານັກຮຽນອ້ອນວອນອະທິຖານ ແລ້ວກໍຕຽມຕົວຕຽມໃຈເຂົ້າສູ່ການນະມັສການພຣະເຈົ້າ. ຄຣູອາດຈະເຊື້ອເຊີນໃຫ້ນັກຮຽນອະທິຖານ.

## ບົດແນະນຳສຳລັບຄຣູສອນ

## ບົດຮຽນທີ 2

## ພຣະຄຣິດຊົງເປັນພຣະເຈົ້າຂອງທຸກໆຄຣິສຕະຈັກ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 2:1-11; 3:14-21

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ພຣະນິມິດ ບົດທີ 2 ແລະ ບົດທີ 3

ຈຸດສຳຄັນຂອງບົດຮຽນນີ້: ພຣະຄຣິດຊົງໜູນໃຈທຸກໆຄຣິສຕະຈັກແລະຊົງຮຽກຮ້ອງໃຫ້ມີຈິດສຳນຶກ ແລະຮຽກຮ້ອງໃຫ້ມີຄວາມເຊື່ອຢ່າງໜັກແໜ້ນ.

ຄຳຖາມເພື່ອສຳຣວດ: ແມ່ນຫັຍງຄືສິ່ງທີ່ພຣະເຢຊູຄຣິດຕ້ອງການໃຫ້ທຸກໆຄຣິສຕະຈັກເຮັດ?

ຈຸດປະສົງຂອງບົດຮຽນ: ເພື່ອລຳດັບຄຳຕັກເຕືອນໃນຈິດໝາຍຄົ້ນຄວ້າວ່າຈະປະຕິບັດອັນໃດໃຫ້ເໝາະ ສົມ.

### ແຜນການສິດສອນ

1. ນຳເຣື່ອງເຂົ້າສູ່ຊີວິດຈິງ

1). ໃນການຈັດຕຽມ ໃຫ້ຊອກຫາປະວັດຂອງຄຣິສຕະຈັກຂອງທ່ານເສັຽກ່ອນ. ແບ່ງປັນວ່າຄຣິສຕະຈັກເກີດຂຶ້ນມາໄດ້ຢ່າງໃດ. (ຖາມຜູ້ທີ່ຢູ່ໂບດດົນກວ່າໝູ່) ເປັນຫຍັງໂບດຂອງເຮົາຈຶ່ງເກີດ (ກໍ່ຮ່າງສ້າງຕົວ) ຂຶ້ນມາ? ເປົ້າໝາຍອັນທຳອິດນັ້ນແມ່ນຫຍັງ? ເປັນຫຍັງພວກເຮົາຈຶ່ງພະຍາຍາມເດີນຕາມເປົ້າໝາຍດັ່ງເດີມ? ພວກເຮົາຖືກປ່ຽນຢ່າງໃດ?

2 ນຳພາສຶກສາພຣະຄັມພີ

2). ໃນພຣະນິມິດບົດທີ 2 ແລະ3 ພຣະເຢຊູໄດ້ໃຫ້ຄຳແນະນຳຕັກເຕືອນຄຣິສຕະຈັກຂອງພຣະອົງວ່າໃຫ້ຕິດຕາມຄວາມຮັກດັ້ງເດີມເດີ້. ຄຣິສຕະຈັກທັງໝົດມີຢູ່ເຈັດຄຣິສຕະຈັກ ແຕ່ພວກເຮົາຈະອະທິບາຍແຕ່ພຽງສາມຄຣິສຕະຈັກເທົ່ານັ້ນ. ໃຫ້ຄືນນີ້ງອ່ານພຣະຄັມພີພຣະນິມິດ 2:1-7 ໃຫ້ຜູ້ທີ່ສມັກໃຈອ່ານ.

3). ໃຊ້ຄຳແນະນຳໃນເຈັ້ຽບົດຮຽນອະທິບາຍສັ້ນກ່ຽວກັບທູດສວັນເຈັດອົງ, ເຄື່ອງຮອງຕີນໂຄມ. ພຣະຄຣິດເປັນຜູ້ ຖືດາວທັງເຈັດດວງຢູ່ໃນເບື້ອງຂວາຂອງພຣະອົງ. (2:2) ເປັນຫຍັງເຄື່ອງຮອງຕີນໂຄມຈຶ່ງເໝາະສົມກັບຕົວຢ່າງນີ້. ກໍເພາະວ່າຄຣິສຕະຈັກແມ່ນແສງສວ່າງຂອງໂລກ. ໃນມັດທາຍ 5:14-16 ພຣະເຢຊູຮຽກຮ້ອງໃຫ້ຄຣິສຕຽນເປັນແສງສວ່າງ.

ອະທິບາຍເຖິງການຄອບຄອງຂອງພຣະເຢຊູ, ການຊົງເຫັນທຸກຢ່າງ, ແລະການຊົງຮູ້ຈັກທຸກຢ່າງ ທີ່ເກີດຂຶ້ນໃນແຜ່ນດິນໂລກນີ້ ບໍ່ວ່າຈະດີຫລືຊົ່ວ. ຖາມ: ພຣະເຢຊູຢັ້ງຢືນເຖິງຄຣິສຕະຈັກເມືອງເອເຟໂຊຢ່າງໃດ? ພຣະອົງມີພຣະປະສົງໃຫ້ພວກເຂົາປ່ຽນແປງຫຍັງແດ່? (ໃຫ້ນັກຮຽນຕອບ ຫລັງຈາກນັ້ນກໍໃຫ້ເວົ້າໃນເຈັ້ຽບົດຮຽນເພີ້ມເຂົ້າ) ອາດຈະເປັນເໝືອນຫົວຂໍ້ ບົດເທສນາ "ຈົ່ງຮັກສາຄວາມຮັກດັ້ງເດີມ" ແມ່ນຫຍັງຄວາມຮັກດັ້ງເດີມທີ່ພວກເຮົາຄວນຈະມີແລະຄວນຈະເຮັດ? (ໃຫ້ຜູ້ສມັກໃຈຕອບ)

ຂໍ້ທີ 7 ກ່າວວ່າ ຜູ້ໃດມີຫູຈົ່ງຟັງເອົາ ນີ້ໝາຍຄວາມວ່າຢ່າງໃດ? ຕ້ອງຟັງຢ່າງລະມັດລະວັງບໍ່? ຂໍ້ຄວາມນີ້

ບໍ່ແມ່ນແຕ່ສຳລັບອາຈານຫລືຄູສອນ ແຕ່ແມ່ນເພື່ອທຸກໆຄົນ, ທຸກຄົນໃນຄຣິສຕະຈັກ. ເຮົາຈະຮັກສາຄວາມຮັກດັ້ງເດີມ ໃນຄຣິສຕະຈັກທີ່ມີຊີວິດໄດ້ຢ່າງໃດ ໃນຄຣິສຕະຈັກຂອງພວກເຮົາ?

4). ມາອ່ານ ພຣະນິມິດ 2:8-11, ຈົດໝາຍນີ້ແມ່ນເຖິງຄຣິສຕະຈັກເມືອງ ຊະເມີນາ. ໃຫ້ຜູ້ທີ່ສມັກໃຈອ່ານອີກ. ປາຫະກະຖານ້ອຍນຶ່ງກ່ຽວກັບເມືອງນີ້. ແລ້ວກໍຖາມຄຳຖາມນີ້: ຂໍ້ 8 ມີຢູ່ 4 ຢ່າງທີ່ພຣະອົງຊົງກະທຳ ມີອັນໃດແດ່? (ຢຸດໃຫ້ນັກຮຽນຄິດແລ້ວຕອບ)
ພຣະເຢຊູຖືກເອີ້ນວ່າ "ເປັນຜູ້ຕົ້ນແລະເປັນຜູ້ປາຍ" ຂໍ້ຄວາມນີ້ໜູນໃຈທ່ານຫຍັງແດ່?
ເຮົາຮູ້ວ່າພວກເຈົ້າມີຄວາມທຸກລຳບາກແລະຍາກຈົນ (ແຕ່ເຈົ້າກໍຮັ່ງມີ ປໂຍກນີ້ ໝາຍຄວາມວ່າຢ່າງໃດ?

5). ຂໍ້ຄວາມສຸດທ້າຍສຳລັບວັນນີ້ແມ່ນຄຣິສຕະຈັກເມືອງລາວດີເຊັຍ. ອາດຈະເຫັນໄດ້ເກືອບວ່າກົງກັນຂ້າມກັບຄຣິສຕະຈັກເມືອງຊະເມີນາ. ອ່ານພຣະນິມິດ 3:14-22. ຄຣູຈະອະທິບາຍສັ້ນໆວ່າກົງກັນຂ້າມຄືແນວໃດ?
ຄຣິສຕະຈັກແຫ່ງນີ້ທຸກຍາກຢ່າງໃດ? ພຣະເຢຊູກ່າວຢ່າງໃດໃນຄຳສອນຂອງພຣະອົງ ແລະຄຳສອນນັ້ນໄດ້ສິດສອນພວກເຮົາຫຍັງແດ່?
ຂໍ້ 19 ພຣະເຢຊູອາດປະຕິເສດການກະທຳຂອງແຕ່ລະຄຣິສຕະຈັກ? ເປັນຫຍັງ? ຖ້ອຍຄຳນີ້ສອນພວກເຮົາຫຍັງແດ່?
ເປັນຫຍັງຄຣິສຕະຈັກເມືອງລາວດີເຊັຍຈຶ່ງເປັນແນວນີ້?
ທ່ານຄິດຢ່າງໃດ ເພື່ອຈະແກ້ໄຂຊ່ວຍຄຣິສຕະຈັກແຫ່ງນີ້?

## 3. <u>ນຳໃຊ້ໃນຊີວິດປະຈຳວັນ</u>

6). ຈົ່ງຮູ້ວ່າ ການສຳເຣັດຂອງຊາວໂລກ ແລະ ການສຳເຣັດຂອງພຣະເຢຊູຄຣິດບໍ່ເໝືອນກັນ
ອົງພຣະເຢຊູຮຽກຮ້ອງໃຫ້ມີຄວາມເຊື່ອແລະວາງໃຈໃນພຣະອົງເທົ່ານັ້ນຈຶ່ງຈະປະສົບຜົນສຳເຣັດໄດ້.

# ບົດແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# ພຣະຄຣິດແມ່ນຄວາມໝາຍແຫ່ງຊີວິດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 4:1-3; 5:1-14
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ພຣະນິມິດ ບົດທີ 4 ແລະ ບົດທີ 5
ຈຸດສຳຄັນຂອງບົດຮຽນນີ້: ກຸນແຈແຫ່ງປະຫວັດສາດແລະຊີວິດ ແມ່ນຢູ່ໃນພຣະຄຣິດ, ພຣະອົງແມ່ນພຣະຜູ້ຊ່ວຍ
ຄຳຖາມເພື່ອສຳຣວດ: ຈະພົບຄວາມໝາຍຂອງປະຫວັດແລະຊີວິດໄດ້ຢູ່ໃສ?
ຈຸດປະສົງຂອງບົດຮຽນ: ເພື່ອຈະຊີ້ແຈງເຖິງໜ້າທີ່ຂອງພຣະຄຣິດໃນການຈັດຕຽມຄວາມໝາຍຂອງປະຫວັດສາດແລະຊີວິດຂອງພວກເຮົາ.

## ແຜນການສິດສອນ

1. ນຳເຣື່ອງເຂົ້າສູ່ຊີວິດຈິງ

1). ຖາມຫ້ອງຮຽນ: ຖ້າທ່ານຢືນຢູ່ແຄມທາງເບິ່ງການເດີນສວນສນາມທີ່ເຄື່ອນຍ້າຍໄປເປັນລຳດັບ. ຫລືອີກອັນນຶ່ງ ຖ້າທ່ານຫາກໄດ້ຂຶ້ນນັ່ງຢູ່ເທິງເຄື່ອງບິນເຮລີຄອບເຕີ້ ເບິ່ງການເຄື່ອນຍ້າຍຕັ້ງແຕ່ຫົວແຖວຈົນເຖິງປາຍແຖວ ທ່ານຢາກຈະເຫັນເປັນແບບໃດ? (ໃຫ້ທຸກຄົນອອກຄວາມຄິດເຫັນ)

2). ແນະນຳໃຫ້ນັກຮຽນເຫັນວ່າຊີວິດກໍເຫມືອນການເດີນສວນສນາມນີ້ລະ. ການເຄື່ອນໄຫວແຕ່ລະຂະບວນກໍເຫມືອນແຕ່ລະວັນຂອງຊີວິດ. ພວກເຮົາເຫັນຊີວິດຜ່ານໄປແຕ່ລະມື້. ແຕ່ພຣະເຈົ້າມີການເຫັນຂອງພຣະອົງແຕກຕ່າງກັບພວກເຮົາ ພຣະອົງເບິ່ງໃນແງ່ມຸມຂອງພຣະອົງ. ພຣະອົງເຫັນການເດີນສວນສນາມແຕ່ຫົວແຖວຈົນເຖິງປາຍແຖວ. ພຣະອົງເຫັນບ່ອນລ້ຽວ ບ່ອນໂຄ້ງທຸກບ່ອນ. ພຣະອົງອວຍພອນໃຫ້ຊີວິດພວກເຮົາແຕ່ລະວັນໃຫ້ຜ່ານພົ້ນໄປດ້ວຍດີ.

3). ບອກນັກຮຽນວ່າການຮ່ຳຮຽນບົດຮຽນມື້ນີ້, ໂຢຮັນໄດ້ໃຫ້ໂອກາດເບິ່ງແຜ່ນດິນສວັນກັບຕາຂອງຜູ້ອ່ານແຕ່ລະຄົນໄດ້ເຫັນ. ໃນຂະນະທີ່ໂຢຮັນກຳລັງຢູ່ໃນການກັກຂັງ, ພຣະເຢຊູໄດ້ເປີດປະຕູສວັນ ໃຫ້ໂຢຮັນໄດ້ເຫັນຄວາມລ້ຳເລີກຕ່າງໆ. ນຳພານັກຮຽນໃຫ້ເປີດໄປໃນພຣະນິມິດ ບົດທີ 4

2. ນຳພາສຶກສາພຣະຄັມພີ

4). ຂຽນລົງໃນກະດານໄວ້ ເພື່ອໃຫ້ນັກຮຽນໄດ້ເຫັນ:
- (1) ພຣະຄຣິດເປັນຄວາມໝາຍແຫ່ງຊີວິດ
- (2) ດຳເນີນຊີວິດໃນແງ່ມຸມອັນໃຫມ່
- (3) ຄວາມສະງ່າຜ່າເຜີຍຂອງກະສັດ (ພນມ. 4:1-3)
- (4) ຄວາມຍິ່ງໃຫຍ່ຂອງພຣະເມສານ້ອຍ

5). ໃຫ້ນັກຮຽນຄົນນຶ່ງອ່ານພຣະຄັມພີພຣະນິມິດ 4:1-5. ໃຊ້ເອກສານເຈັ້ຽບົດຮຽນ ແລະເຈັ້ຽບົດແນະນຳຄຳສິດສອນ

ຄຽງຄູ່ກັນ ແລ້ວອະທິບາຍສັ້ນໆ ກ່ຽວກັບການປາກົດເຫັນແຜ່ນດິນສວັນຂອງໂຢຮັນ. ໃຫ້ເນັ້ນໃສ່ຈຸດທຳອິດຂອງ ຫົວຂໍ້ບົດຮຽນ ເບີ 1.

6). ຫົວຂໍ້ ເບີ 2 ໃຫ້ອ່ານ 5:1-4. ຊຶ່ງກ່າວເຖິງໜັງສືເປັນມ້ວນ. ກ່າວສັ້ນໆກ່ຽວກັບໜັງສືນີ້ ໃຫ້ເບິ່ງໃນເຈັ້ຽບົດ ຮຽນ. ແລ້ວໃຫ້ເນັ້ນເຖິງຄວາມວິຕົກກັງວົນ, ແລະຮ້ອງໄຫ້ຮ່ຳໄຮຂອງໂຢຮັນ ວ່າແມ່ນຜູ້ໃດທີ່ຈະສົມຄວນເປີດ ໜັງສືນີ້ໄດ້.

7). ໃຫ້ອ່ານ 5:5-14 (ໃຫ້ໃຊ້ເວລາອ່າວຫລາຍແດ່) ອະທິບາຍເຖິງຄວາມສົມຄວນຂອງພຣະເມສານ້ອຍ. ທ່ານ ຄິດຢ່າງໃດກ່ຽວກັບຄຳວ່າ "ສິງແຫ່ງຕະກຸນຢູດາ, ໜໍ່ເຊື້ອຂອງດາວິດ, ແລະພຣະເມສານ້ອຍ ຜູ້ຖືກຂ້າແລ້ວ ນັ້ນ" ໃນບົດທີ 5 ນີ້ ສ່ວນຫລາຍແມ່ນກ່າວເຖິງການນະມັສການແກ່ຜູ້ທີ່ສົມຄວນນັ້ນ ແລະທຸກໆຊາດ ທຸກໆພາ ສາແມ່ນໄດ້ມາປະກອບສ່ວນນຳ.

## 3. <u>ນຳໃຊ້ໃນຊີວິດປະຈຳວັນ</u>

8). ໃຊ້ຄຳຖາມເຫລົ່ານີ້ ເພື່ອຈະໄດ້ນຳພາການສົນທະນາ:
ທ່ານຄິດຢ່າງໃດ ກ່ຽວກັບການເດີນທາງໄປເຫັນສວັນຂອງໂຢຮັນ?
ໃນຂະນະທີ່ຄຣິສຕະຈັກແຖບເອເຊັຽມີການກົດຂີ່ຂົ່ມເຫັງເກີດຂຶ້ນດັ່ງນີ້ ບົດຮຽນນີ້ຈະຊ່ວຍທ່ານຢ່າງໃດ?
ຄຳສອນອັນໃດໃນວັນນີ້ທີ່ທ່ານເຫັນວ່າຈະຊ່ວຍຊີວິດຂອງທ່ານໃນປັດຈຸບັນນີ້?
ໃນມື້ນີ້ເຮົາໄດ້ຮຽນບົດຮຽນແລ້ວ ມັນຈະຊ່ວຍຊີວິດເຮົາຢ່າງໃດ?

9). ນຳພາອະທິຖານ ຕຽມຕົວທີ່ຈະເຂົ້າເຝົ້າພຣະເຈົ້າ

# ບົດແນະນຳການສິດສອນ
# ບົດຮຽນທີ 4
# ແກະຕາປະທັບຂອງໜັງສືມ້ວນຂອງພຣະເຈົ້າ

---

ຂໍ້ພຣະຄຳພີສຳລັບບົດຮຽນ: ພຣະນິມິດ 6
ຂໍ້ພຣະຄຳພີສຳລັບເບື້ອງຫລັງ: ພຣະນິມິດ 6
ຈຸດສຳຄັນຂອງບົດຮຽນນີ້: ເຫດການຜັນປ່ຽນແລະປະຫວັດສາດປັ່ນປ່ວນຮ້າຍແຮງປານໃດກໍຕາມ ພຣະເຈົ້າຊົງເປັນອົງພຣະຜູ້ເປັນເຈົ້າຂອງເຫດການທັງປວງ.
ຄຳຖາມເພື່ອການສຳຫລວດ: ໃນໂລກທີ່ປັ່ນປ່ວນຢ່າງນີ້ ພວກເຮົາມີຄວາມຫວັງອັນໃດແດ່?
ຈຸດປະສົງຂອງບົດຮຽນນີ້: ອະທິບາຍເຖິງຄວາມໝາຍແລະຊີ້ບອກເຖິງຄວາມກ່ຽວຂ້ອງຂອງຕາທັງຫົກ.

## ແຜນການສິດສອນ

### 1. ຊີວິດສະພາບຕົວຈິງ

1).ໃນວັນທັມມະດາກ່ອນວັນອາທິດຈະມາເຖິງໃຫ້ຕິດຕໍ່ຫາສະມາຊິກຫ້ອງຮຽນຄົນນຶ່ງ ໃຫ້ລາວໄປສຶກສາຄົ້ນຄວ້າເຣື່ອງລາວປະຫວັດສາດຂອງຊາວພາເທັຽ (Parthia or Phartians)
ແລະໃຫ້ອີກຄົນນຶ່ງໄປສຶກສາຄົ້ນຄວ້າປະຫວັດ
ຂອງຈັກກະພັດ ນີໂຣ ແລະ ໂດມີເຊັນ (Emperor Nero and Domitian).
(ເຣື່ອງລາວພວກນີ້ຈະພົບໄດ້ໃນປື້ມສາ
ລານຸກົມຄືປື້ມເຣື່ອງລາວສາລະພັດ (Encyclopedia).

2).ໃຫ້ເອົາຊອງຈົດໝາຍທີ່ຕິດຮຽບຮ້ອຍແລ້ວ ຢອດທຽນໄຂຫລືຂີ້ຊົ່ງໃສ່ທາງກາງບ່ອນຕິດຊອງຈົດໝາຍນັ້ນກ່ອນມັນຈະແຫ້ງໃຫ້ເອົາຫົວແຫວນມາທັບໃສ່ ເພື່ອໃຫ້ເປັນຕາປະທັບປິດຊອງ. ຖ້າບໍ່ເອົາຊອງຈົດໝາຍກໍໃຫ້ເອົາເຈັ້ຽຂາວມາພັບເປັນມ້ວນ ເຫມືອນກັບໜັງສືມ້ວນກໍໄດ້ ແລ້ວເອົາເຊືອກມາມັດ. ຫລັງຈາກນັ້ນ ໃຫ້ເອົາທຽນໄຂຫລື ຂີ້ຊົ່ງມາຢອດໃສ່ບ່ອນຂໍ້ມັດຂອງເຊືອກ ແລ້ວເອົາຫົວແຫວນມາທັບໃສ່.
ເພື່ອນຳມາໃຫ້ສະມາຊິກຫ້ອງເບິ່ງ. ຄົນໜຸ່ມບາງຄົນອາດຈະເຄີຍເຫັນກໍມີ.

3).ໃຫ້ຖາມສະມາຊິກຫ້ອງວ່າ: "ເສລີພາບໃນການເຊື່ອຖືສາສນາ" ມີຄວາມໝາຍວ່າຢ່າງໃດ? ໃຫ້ວາດມະໂນພາບເບິ່ງວ່າ ຊີວິດທີ່ປາສຈາກເສຣີພາບໃນການເຊື່ອຖືສາສນາແລ້ວຈະເປັນຢ່າງໃດ? ໃຫ້ພວກສະມາຊິກຫ້ອງນຳຄຳຖາມນີ້ມາສົນທະນາກັນ.

### 2. ສຶກສາບົດຮຽນ

4).ກ່ອນຈະອ່ານພຣະທັມພຣະນິມິດ 6:1-8 ໃຫ້ທຸກຄົນຟັງ. ໃຫ້ບອກສະມາຊິກຫ້ອງໃຫ້ສັງເກດເບິ່ງລັກສະນະຂອງຜູ້ຂີ່ມ້າແຕ່ລະຄົນແລະພິຈາຣະນາເບິ່ງຄວາມໝາຍຂອງພວກເຂົາດ້ວຍ. ໃຫ້ອ່ານເບິ່ງບົດຮຽນໃນຄູ່ມືຂອງສະມາຊິກ

ຫ້ອງ ຊຶ່ງໄດ້ອະທິບາຍເຖິງຄວາມຫມາຍຂອງຜູ້ຂີ່ມ້າຜູ້ທີນຶ່ງ. ພວກສາສນາຈານຕ່າງມີຄວາມເຫັນບໍ່ຄືກັນໃນການຕີຄວາມຫມາຍຂອງພຣະຄັມພີຕອນນີ້ ໃຫ້ຖາມພວກສະມາຊິກຫ້ອງວ່າ ພວກເຂົາເຫັນພ້ອມກັບຜູ້ໃດ.

5).ໃຫ້ສະມາຊິກຫ້ອງອອກຄວາມຄິດເຫັນຄວາມຫມາຍຂອງຜູ້ຂີ່ມ້າຜູ້ທີສອງ ທີສາມ ແລະທີສີ່. ໃຫ້ໃຊ້ບົດຮຽນໃນຄູ່ມືຂອງສະມາຊິກຫ້ອງ ຊ່ອຍໃຫ້ຄວາມເຫັນພ້ອມກັບຄວາມເຫັນຂອງສະມາຊິກຫ້ອງ.

6).ອ້າງອີງຕາມບົດທີ 6:9-11. ບອກໃຫ້ສະມາຊິກຫ້ອງຮຽນສັງເກດເບິ່ງຂໍ້ພຣະຄັມພີທີ່ໃຫ້ຄວາມຫມັ້ນໃຈວ່າ ພຣະເຈົ້າບໍ່ເຄີຍລືມໄພ່ພົນທີ່ຖືກຄວາມລຳບາກຂອງພຣະອົງຈັກເທື່ອ. ຫລັງຈາກໃຫ້ຜູ້ໃດຜູ້ນຶ່ງອ່ານພຣະທັມຂໍ້ນີ້ໃຫ້ດັງໆແລ້ວບອກໃຫ້ພວກເຂົາອອກຄວາມຄິດເຫັນ.

7).ກ່ອນຈະອ່ານບົດທີ 6:12-17. ບອກໃຫ້ສະມາຊິກຫ້ອງສັງເກດເບິ່ງພຣະທັມຕອນນີ້ວ່າ ແມ່ນຫຍັງຈະເກີດຂື້ນກັບຜູ້ທີ່ຂົ່ມເຫັງໄພ່ພົນຂອງພຣະເຈົ້າ. ຫລັງຈາກອ່ານສຸດແລ້ວ ໃຫ້ພວກເຂົາອອກຄວາມຄິດເຫັນ.

## 3. ຫມູນໃຊ້ໃນການກະທຳ

8).ໃຫ້ໃຊ້ຄຳຖາມຈາກ ບົດຮຽນໃນຄູ່ມືຂອງສະມາຊິກຫ້ອງ ເພື່ອນຳພາພວກເຂົາໃຫ້ຄົ້ນຄວ້າພຣະທັມພຣະນິມິດ ບົດທີ 6 ໃຫ້ແຕກສານ.

9).ໃຫ້ຖາມສະມາຊິກຫ້ອງວ່າ: ຄຣິສຕຽນມີຫນ້າທີ່ຮັບຜິດຊອບຢ່າງໃດ ເພື່ອປົກປັກຮັກສາສິດເສຣີພາບໃນການເຊື່ອຖືສາສນາຊຶ່ງອະເມຣິກາໄດ້ຮັບຢູ່ໃນປະຈຸບັນນີ້? ພວກເຮົາມີຫນ້າທີ່ຮັບຜິດຊອບອັນໃດ ເພື່ອຕໍ່ສູ້ໃຫ້ມີເສຣີພາບຢ່າງນີ້ກັບຄົນອື່ນທີ່ຢູ່ໃນໂລກນີ້?

10).ໃຫ້ປິດບົດຮຽນດ້ວຍການອ້ອນວອນ ຂອບຄຸນພຣະເຈົ້າໃນເສຣີພາບທີ່ພວກເຮົາມີ ແລະອ້ອນວອນເພື່ອຄົນອື່ນໆໃນໂລກນີ້ທີ່ພວກເຂົາບໍ່ມີເສຣີພາບຄືພວກເຮົາ.

# ບົດແນະນຳຄູສອນ
# ບົດຮຽນທີ 5
# ພຣະເຈົ້າຊົງຄຸ້ມຄອງ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 7
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ພຣະນິມິດ 7
ຈຸດສຳຄັນຂອງບົດຮຽນນີ້: ໃຫ້ຮູ້ວ່າພຣະເຈົ້າກໍຈະຄຸ້ມຄອງໄພ່ພົນຂອງພຣະອົງ.
ຄຳຖາມເພື່ອການສຳຣວດ: ເມື່ອສິ່ງບໍ່ດີເກີດຂຶ້ນໃນຊີວິດ ເຮົາຈະເຮັດແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາເຂົ້າໃຈວ່າພຣະເຈົ້າຊົງເປັນໃຫຍ່ກວ່າບັນຫາ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ
- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ລົມພາຍຸໃຫຍ່ເປັນການບົ່ງບອກເຖິງໂຣກພັຍໄຂ້ເຈັບແລະການລົງໂທດໃນສມັຍບູຮານ ແຕ່ກ່ອນຈະມີລົມພັດມານັ້ນ ພຣະເຈົ້າໄດ້ໃຊ້ເທວະດາຂອງພຣະອົງມາຫ້າມລົມທັງສີ່ທິດຂອງໂລກບໍ່ໃຫ້ມາຖືກໄພ່ພົນຂອງພຣະເຈົ້າຈົນກວ່າເທວະດາອີກຕົນນຶ່ງມາປະທັບຕາທີ່ໜ້າຜາກຜູ້ຮັບໃຊ້ຂອງພຣະອົງໄວ້ໝົດກ່ອນຈຶ່ງຈະໃຫ້ລົມນັ້ນພັດມາ.

1. ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 7:1-8 ຊົງສັ່ງຫ້າມລົມ
   ກ. ເທວະດາສີ່ຕົນຫ້າມລົມທັງສີ່ທິດ. ທິດເໜືອ, ທິດໃຕ້, ທິດຕາເວັນອອກ, ແລະທິດຕາເວັນຕົກ.
   ຂ. ໂປໂລກ່າວໃນ ເອເຟໂຊ 1:13-14 ຄຣິສຕຽນຈະຖືກປະທັບຕາໄວ້ກ່ອນພິພາກສາ.
   ຄ. ຜູ້ທຳນວາຍເອຊາຢາໄດ້ທຳນວາຍໄວ້ ໃນເອຊາຢາ 11:12 ຈະທ້ອນໂຮມໄພ່ພົນຂອງພຣະເຈົ້າຈາກທິດທັງສີ່ຂອງໂລກ.
   ງ. ຜູ້ທຳນວາຍ ເອເຊກຽນທຳນວາຍເຖິງຈຸດຈົບແຫ່ງດິນແດນທັງໝົດ (ເອເຊກຽກ 7:2)
   ຈ. ຈຳນວນ 144.000 ຄົນ ໃນກະກຸນຂອງອິສຣາເອນ ຖືກປະທັບຕາເປັນໄພ່ພົນພິເສດຂອງພຣະເຈົ້າ. ລາຍຊື່ກະກຸນຢູດາອອກໜ້າໝູ່ດ້ວຍວ່າພຣະເຢຊູເປັນກະກຸນຂອງຢູດາ. (ຂໍ້ 5).

2. ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 7: 9-12 ມວນຊົນຈາກນາໆປະເທດ
   ກ. ໂຢຮັນເຫັນຝູງຄົນຫລວງຫລາຍຈາກນາໆປະເທດ ສະແດງວ່າບໍ່ແມ່ນແຕ່ 144.000 ໄປສວັນ.
   ຂ. ຝູງຊົນນຸ່ງເຄື່ອງຂາວຄ້າຍຄືພວກເຮົານຸ່ງເຄື່ອງຂາວບັບຕິສະມາ ຢືນຢູ່ຕໍ່ໜ້າຣາຊບັນລັງ.
   ຄ. ເຄື່ອງຂາວໝາຍເຖິງການຖືກຊຳຣະຄວາມຜິດບາບແລ້ວໂດຍພຣະໂລຫິດອັນປະເສີດຂອງພຣະເຢຊູ.
   ງ. ຄົນຈຳພວກນີ້ແມ່ນເຊື້ອສາຍຂອງອັບຣາຮາມທາງຄວາມເຊື່ອ ກຳລັງພາກັນນະມັສການພຣະເຈົ້າ.

3. <u>ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 7: 13-17 ຝູງຊົນທີ່ນຸ່ງເຄື່ອງຂາວ</u>

ກ. ອາວຸໂສຖາມໂຢຮັນເຖິງຄົນທີ່ນຸ່ງເຄື່ອງຂາວ ແຕ່ໂຢຮັນຕອບວ່າ ຜູ້ອາວຸໂສນັ້ນຮູ້ຄົນພວກນີ້ດີກວ່າເພິ່ນ.

ຂ. ອາວຸໂສບອກໂຢຮັນວ່າ "ຄົນເຫລົ່ານີ້ ແຫລະທີ່ມາຈາກຄວາມທຸກຂະເວທະນາອັນໃຫຍ່ ເຂົາໄດ້ຊຳຣະເສື້ອຜ້າຂອງເຂົາໃຫ້ຂາວສະອາດດ້ວຍພຣະໂລຫິດຂອງ ພຣະເມສານ້ອຍນັ້ນ, ເພາະເຫດນັ້ນເຂົາຈຶ່ງໄດ້ຢູ່ຕໍ່ໜ້າພຣະຣາຊບັນລັງຂອງພຣະເຈົ້າ ແລະປະຕິບັດພຣະອົງໃນພຣະວິ ຫານຂອງພຣະອົງທັງ ກາງເວັນແລະກາງຄືນ ແລະພຣະອົງຜູ້ຊົງປະທັບເທິງຣາຊບັນລັງນັ້ນຈະຊົງສະຖິດຢູ່ນຳແລະປົກ ປ້ອງຄຸ້ມຄອງເຂົາ" (ຂໍ້ 15).

ຄ. ພຣະທັມຕອນນີ້ເປັນການເລົ້າໂລມໃຈຜູ້ທີ່ຖືກກົດຂີ່ຂົ່ມເຫງໃຫ້ມີກຳລັງໃຈຂຶ້ນອີກ.

ງ. ຝູງຊົນທີ່ນຸ່ງເຄື່ອງຂາວນັ້ນແມ່ນຜູ້ທີ່ຊຳຣະຄວາມຊົ່ວມົວໝອງແລ້ວໂດຍພຣະໂລຫິດພຣະເຢຊູ.

ຈ. ພວກເຂົາເຈົ້າຖ້າຮັບລາງວັນ, ພ້ອມທີ່ຈະຮັບໃຊ້ພຣະເຈົ້າທຸກເວລາ, ແລະພຣະເຈົ້າຈະເປັນຜູ້ປົກປ້ອງຄຸ້ມຄອງເຂົາຈາກໂຣກພັຍຕ່າງໆ.

ສ. ກະສັດດາວິດແຕ່ງເພງສັຣເສີນ 23 ຈາກໃຈຈິງ ແລະດາວິດກໍໄວ້ວາງໃຈຕາມທີ່ແຕ່ງໄວ້.

ຊ. ພຣະເຢຊູປະກາດວ່າພຣະອົງຊົງເປັນຜູ້ລ້ຽງແກະທີ່ດີ (ໂຢຮັນ 10:12).

<u>ຄຳຖາມ:</u>

1. ພຣະເຈົ້າຊົງຢັບຢັ້ງບໍ່ໃຫ້ລົມພັດມາຖືກໄພ່ພົນຂອງພຣະອົງດ້ວຍວິທີໃດ?

2. ແມ່ນໃຜຈະເປັນຜູ້ປະທັບຕາໃສ່ໜ້າຜາກຂອງໃຜ?

3. ເປັນຫຍັງໄພ່ພົນຂອງພຣະເຈົ້າຈຶ່ງຈຳຕ້ອງປະທັບຕາທີ່ໜ້າຜາກ.

4. ທ່ານຄິດວ່າທີ່ສວັນຈະມີແຕ່ 144.000 ເທົ່ານັ້ນບໍ່?

5. ຄົນທີ່ນຸ່ງເຄື່ອງຂາວນັ້ນມີໃຜແດ່?

6. ຄົນທີ່ນຸ່ງເຄື່ອງຂາວຈະມີການອຶດຫິວຫລືອີ່ມເຕັມຢ່າງໃດ?

7. ໃຜເປັນຜູ້ຄ້ຳປະກັນຝູງຊົນທີ່ນຸ່ງເຄື່ອງຂາວ.

# ບົດແນະນຳຄຣູສອນ
# ບົດຮຽນທີ 6
# ສຽງແກພິພາກສາ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 8:1-9:21
ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ພຣະນິມິດ 8-9
ຈຸດສຳຄັນຂອງບົດຮຽນນີ້: ການຕັດສິນຂອງພຣະເຈົ້າຊົງທ່ຽງທັມ
ຄຳຖາມເພື່ອການສຳຣວດ: ເປັນການດີບໍ່ທີ່ພຣະເຈົ້າຈະປາບຊາຕານ.
ຈຸດປະສົງຂອງບົດຮຽນນີ້: ສຽງແກແຫ່ງການພິພາກສາເປັນສັນຍານ.

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ
- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ນຳບົດຮຽນເຂົ້າສູ່ຊີວິດຈິງ

1. ເລີ່ມຕົ້ນດ້ວຍການເລົ່າເຣື່ອງການກົດຂີ່ຂົ່ມເຫງຄຣິສຕຽນທີ່ທ່ານຮູ້, ເປັນຫຍັງພຣະເຈົ້າຈຶ່ງບໍ່ລົງໂທດເຂົາ? ຈາກນັ້ນໃຫ້ນັກຮຽນອອກຄຳເຫັນຈັກໜ່ອຍ.

2. ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 8: 1-6 ເປີດຕາປະທັບດວງທີ 7
   ກ. ພຣະເມສານ້ອຍເປີດຕາປະທັບດວງທີເຈັດແມ່ນດວງສຸດທ້າຍ ໝາຍຄວາມວ່າໃຫ້ເທວະດາຕຽມຮັບຄຳສັ່ງ.
   ຂ. ເມືອງສວັນມິດງຽບໄປປະມານເຄິ່ງຊົ່ວໂມງແມ່ນງຽບສງັດລໍຖ້າຮັບຄຳສັ່ງຂອງພຣະເຈົ້າ.
   ຄ. ມີເທວະດາອີກຕົນນຶ່ງຖືໝໍ້ຄຳເພື່ອຖວາຍຮ່ວມກັບໄພ່ພົນຂອງພະເຈົ້າທີ່ອ້ອນວອນ.
   ງ. ເທວະດາໂຍນໝໍ້ຄຳນັ້ນລົງສູ່ໂລກແລ້ວມີສຽງຟ້າຮ້ອງ, ຟ້າແມບ ແຜ່ນດິນໄຫວຫມາຍຄວາມວ່າພຣະເຈົ້າ ໄດ້ຮັບຟັງຄຳໄຫວ້ວອນຂອງໄພ່ພົນຂອງພຣະອົງຜ່ານເທວະດາຕົນນັ້ນ ແລ້ວພຣະອົງກໍຊົງພຣະພິໂຣດ.

3. ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 8:7-12 ສຽງແກສີ່ອັນທຳອິດ
   ກ. ເທວະດາຕົນແຣກເປົ່າແກ ເປັນການເລີ້ມຕົ້ນການລົງໂທດ.
   ຂ. ເທວະດາຕົນທີສອງເປົ່າແກ ທະເລກາຍເປັນທະເລເລືອດນຶ່ງສ່ວນສາມ ສິ່ງສາຣະພັດກໍຕາຍນຶ່ງສ່ວນສາມ.
   ຄ. ເທວະດາຕົນທີ່ສາມເປົ່າແກ ດາວໄຟຂົມຕົກຈາກຟ້າ ແມ່ນ້ຳກໍຂົມນຶ່ງສ່ວນສາມ ຄົນກໍຕາຍນຶ່ງສ່ວນສາມ.
   ງ. ເທວະດາຕົນທີສີ່ເປົ່າແກ ດວງອາທິດ, ດວງຈັນ, ດວງດາວ ກໍມືດນຶ່ງສ່ວນສາມ ດ້ວຍວ່າໂລກນີ້ບໍ່ຍອມ ເຊື່ອຟັງພຣະເຈົ້າ ແຖມຍັງຂົ່ມເຫງໄພ່ພົນຂອງພຣະອົງ ດັ່ງນັ້ນພຣະພິໂຣດເຖິງນຶ່ງສ່ວນສາມ.

4. ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 9:1-6 ສຽງແກທີ 5

ກ. ເທວະດາຕົນທີຫ້າເປົ່າແກ ດາວຕົກຈາກຟ້າຮັບຂໍກະແຈເຫວເລິກ ແມ່ນກະແຈໜໍ້ມາຣຶກ

ຂ. ເພິ່ນເປີດເຫວເລິກ ແລ້ວມີຄວັນຄໍາອອກມາຈາກດວງອາທິດແລະອາກາດມືດໄປທົ່ວ.

ຄ. ຝູງຕັກແຕນອອກມາຈາກມະຣຶກແລ້ວກັດຄົນທັງຫລາຍໃຫ້ເຈັບສາຫັດແຕ່ພຣະເຈົ້າສັ່ງມັນບໍ່ໃຫ້ກັດຄົນຈົນຄົນຕາຍ.

5. <u>ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 9:13-15 ສຽງແກທີ 6</u>

ກ. ເທວະດາຕົນທີຫົກເປົ່າແກ ສຽງກໍດັງອອກມາຈາກແກທັງສີ່ແຈແທ່ນຄໍາ ເປັນແກສັ່ງປ່ອຍເທວະດາຊົ່ວທັງສີ່ທີ່ຂັງໄວ້ໃນແມ່ນໍ້າ ຢູຟາເຕອອກມາ.

ຂ. ທັງສີ່ເປັນເທວະດາແຕ່ບໍ່ມີຣິດອໍານາດເຮັດສິ່ງໃດໄດ້ ແມ່ນແຕ່ຈະປ່ອຍຕົນເອງຈາກຄຸກຂັງກໍບໍ່ໄດ້.

ຄ. ເມື່ອປ່ອຍພວກມັນແລ້ວມັນກໍມີຣິດອໍານາດອີກ ຕາມກໍາໜົດທີ່ພຣະເຈົ້າມີໄວ້ສໍາລັບພວກມັນ.

ງ. ພຣະເຈົ້າຊົງປ່ອຍເທວະດາຊົ່ວໃຫ້ນໍາກອງທະຫານອອກໄປຂ້າຄົນທັງຫລາຍທີ່ບໍ່ມີເຄື່ອງໝາຍເປັນໄພ່ພົນຂອງພຣະເຈົ້າທີ່ໜ້າຜາກ. ຄົນທີ່ບໍ່ເຊື່ອນັ້ນຕາຍໄປນຶ່ງສ່ວນສາມ.

ຈ. ພຣະເຈົ້າຊົງໃຫ້ມີເຫດການເຫລົ່ານີ້ເກີດຂຶ້ນນຶ່ງສ່ວນສາມ ສແດງເຖິງພຣະພິໂຣດຂອງພຣະເຈົ້າເກີດຂຶ້ນນຶ່ງສ່ວນສາມແລ້ວ.

<u>ຄໍາຖາມ:</u>

1. ພຣະເມສານ້ອຍເປີດຕາປະທັບດວງທີ 7 ແລ້ວເປັນຫຍັງເມືອງສວັນຈຶ່ງມີດງຽບປະມານເຄິ່ງຊົ່ວໂມງ?

2. ຄໍາໄຫວ້ວອນຮ້ອງທຸກຂອງໄພ່ພົນພຣະເຈົ້າໄປເຖິງພຣະອົງຢ່າງໃດ?

3. ເມື່ອພຣະເຈົ້າໄດ້ຍິນຄໍາໄຫວ້ວອນຜ່ານເທວະດາທີ່ຖືໜໍ້ຄໍາແລ້ວພຣະອົງມີພຣະທັຍຢ່າງໃດ?

4. ພຣະພິໂຣດຂອງພຣະອົງມີຫລາຍປານໃດ?

5. ໃນບົດຮຽນວັນນີ້ສອນຫຍັງທ່ານແດ່?

## ບົດແນະນຳສຳລັບຄຣູສອນ
## ບົດຮຽນທີ 7
## ເປັນພະຍານດ້ວຍຄວາມສັດຊື່

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 10:1-7;11:1-15
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພຣະນິມິດ 10-11
ຈຸດສຳຄັນຂອງບົດຮຽນນີ້: ແມ່ນວ່າຈະຖືກການຕໍ່ຕ້ານ, ໄພ່ພົນຂອງພຣະເຈົ້າຈະຕ້ອງເປັນພຍານເຣື່ອງຄວາມເຊື່ອຂອງພວກເຂົາຕໍ່ໄປ.
ຄຳຖາມເພື່ອການສຳຣວດ: ໄພ່ພົນຂອງພຣະເຈົ້າຈະເຣັດແນວໃດເມື່ອປະເຊີນກັບການຕໍ່ສູ້ ເພາະຄວາມເຊື່ອ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະເຫັນການກ່ຽວພັນຂອງການເປັນພະຍານແບບສັດຊື່ຊຶ່ງໄດ້ບັລຍາຍໄວ້ໃນຕອນນີ້.

## ແຜນສຳລັບການສອນ

1. ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1). ຄົ້ນຄວ້າເບິ່ງຊີວິດຂອງປະທານາທິບໍດີຄົນທຳອິດຂອງອະເມຣິກາ (ທ່ານຈອດ ວໍຊິງຕັນ). ເລົ່າເຣື່ອງຄວາມກ້າຫານຂອງທ່ານໃນການຕໍ່ສູ້ເພື່ອເອກຣາດຈາກປະເທດອັງກິດ ໃຫ້ພວກນັກຮຽນຟັງ. ຖາມ: ແມ່ນຫຍັງເຣັດໃຫ້ວໍຊິງຕັນມີຄວາມກ້າຫານ? ປະເທດອະເມຣິກາຈະແຕກຕ່າງແນວໃດຖ້າຂາດຄົນກ້າຫານ ເຊັ່ນທ່ານວໍຊິງຕັນ ແລະຄົນອື່ນໆໃນປວັດສາດ?

2). ບອກນັກຮຽນວ່າບົດຮຽນນີ້ນີ້ຊີ້ໃຫ້ເຫັນຢ່າງແຈ່ມແຈ້ງວ່າພຣະເຈົ້າຊົງມີພຣະປະສົງໃຫ້ໄພ່ພົນຂອງພຣະອົງເປັນ
ພຍານເຣື່ອງຂ່າວປະເສີດ ບໍ່ວ່າພວກເຂົາຈະຕົກຢູ່ໃນສະພາບອັນຕະລາຍເທົ່າໃດກໍຕາມ.

2. ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3). ເຊີນນັກຮຽນໃຫ້ຕັ້ງໃຈເບິ່ງພົນປາກົດ
ແທນທີ່ຈະໄປເນັ້ນໃສ່ລາຍລະອຽດຂອງນິມິດໝາຍໃນຂະນະທີ່ພວກເຂົາ
ເຈົ້າອ່ານພຣະທັມພຣະນິມິດບົດທີ 10 ແລະ11. ຕົວຢ່າງ: ອ່ານ 10:1-2. ແນະນຳວ່າ ສິ່ງທີ່ພວກເທວະດາໄດ້ເຣັດນັ້ນສຳຄັນກວ່າການຈົດຈຳຮູບຮ່າງຂອງພວກເຂົາ. ຖາມ: ແມ່ນຫຍັງໄດ້ເກີດຂຶ້ນເວລາເທວະດາຮ້ອງ?

4). ອະທິບາຍບົດຮຽນໂດຍໃຊ້ຄຳບັລຍາຍສຳລັບຂໍ້ 10:1-7. ພານັກຮຽນເປີດເບິ່ງ ແລະອ່ານ ເອເຊກຽນ 2:8--3:3.
ອ່ານເຣື່ອງເອເຊກຽນກິນໜັງສືມ້ວນ ແລ້ວປຽບທຽບກັບພຣະທັມພຣະນິມິດ 10:8-11.

5). ອະທິບາຍຕໍ່ໄປໂດຍໃຊ້ຄຳບັລຍາຍສຳລັບ 11:1-15 ເພື່ອຈະໄດ້ເຂົ້າໃຈນິມິດຂອງທ່ານໂຢຮັນ. ເລົ່າເຣື່ອງການຂົ່ມ
ເຫງຄຣິສຕຽນໃນປະເທດລາວໃຫ້ນັກຮຽນຟັງ (ຄຣິສຕຽນໃນປະເທດລາວຖືກກົດຂີ່ຂົ່ມເຫງເພາະຄວາມເຊື່ອຖືໃນ
ອົງພຣະເຢຊູຄຣິດ; ບາງຄົນຖືກຈຳຄຸກເພາະບໍ່ຍອມລາອອກສາສນາຄຣິດ ແລະຫລາຍຄົນກໍຖືກຂ້າຕາຍ).

6). ພານັກຮຽນທ່ອງຂຶ້ນໃຈພາກທຳອິດຂອງຄຳອະທິຖານຂອງພຣະເຢຊູໃນ ມັດທາຍ 6:10, "ຂໍໃຫ້ພຣະຣາຊອາ
ນາຈັກຂອງພຣະອົງມາຕັ້ງຢູ່ ຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງ ໃນສວັນເປັນຢ່າງໃດກໍໃຫ້ເປັນໄປ
ຢ່າງນັ້ນທີ່ແຜ່ນດິນໂລກ." ສັງເກດເບິ່ງຄວາມກ່ຽວພັນຂອງຄຳອ້ອນວອນນີ້ ກັບພຣະນິມິດ 11:13-15.

## 3. <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7). <u>ຖາມ</u>: ທ່ານເຄີຍຕົກຢູ່ໃນສະພາບທີ່ວ່າ ຖ້າທ່ານເປັນພະຍານເຣື່ອງພຣະຄຣິດຫລືເວົ້າເຣື່ອງຂ່າວປະເສີດ ທ່ານຈະ
ຖືກການຂົ່ມເຫງຢ່າງບໍ່ຕ້ອງສົງສັຍເລີຍບໍ່? (ຖ້າຄຳຕອບແມ່ນ <u>ບໍ່</u>, ໃຫ້ເຊີນຜູ້ໃດຜູ້ນຶ່ງທີ່ເຄີຍຖືກມາແລ້ວໃຫ້ເລົ່າ
ເຣື່ອງໃຫ້ເພື່ອນນັກຮຽນຟັງ). ຫລັງຈາກນັ້ນໃຫ້ຖາມວ່າ: ຖ້າພວກເຮົາບໍ່ໄດ້ຖືກຂົ່ມເຫງຢູ່ໃນປະເທດນີ້, ແມ່ນຫຍັງ
ຄືສິ່ງທີ່ກີດກັ້ນພວກເຮົາບໍ່ໃຫ້ເປັນພະຍານເຣື່ອງຄວາມເຊື່ອຂອງເຮົາ?

8). ນຳການສົນທະນາ (ຖ້າເວລາພໍ) ໂດຍໃຊ້ຄຳຖາມໃນທ້າຍບົດຮຽນຂໍ້ທີ 1 ແລະທີ 4.

9). ອະທິຖານປິດໂດຍອ້ອນວອນຂໍໃຫ້ພຣະເຈົ້າຊົງຊ່ວຍນັກຮຽນແຕ່ລະຄົນໃຫ້ມີໂອກາດໄດ້ເປັນພະຍານເຣື່ອງຄວາມ
ເຊື່ອຂອງຄຣິສຕຽນ ແລະຂໍໃຫ້ພຣະອົງຊົງປະທານຄວາມກ້າຫານໃຫ້ແຕ່ລະຄົນເມື່ອພຣະອົງໄດ້ເປີດໂອກາດໃຫ້.

# ບົດແນະນຳສຳລັບຄຣູ
# ບົດຮຽນທີ 8
# ຕໍ່ສູ້ກັບອຳນາດມານ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 12:1-6, 13-18; 13:1-4, 11-18
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພຣະນິມິດ 12-13
ຈຸດສຳຄັນຂອງບົດຮຽນນີ້: ໃນຂະນະທີ່ໄພ່ພົນຂອງພຣະເຈົ້າປະເຊີນໜ້າກັບການຕໍ່ຕ້ານ ແລະການທ້າທາຍຈາກອຳນາດມານ, ພວກເຮົາຕ້ອງດຳເນີນຊີວິດດ້ວຍຄວາມອົດທົນແລະຄວາມເຊື່ອ, ໝັ້ນໃຈໃນໄຊຊະນະຂອງພຣະເຈົ້າ.
ຄຳຖາມເພື່ອການສຳຣວດ: ມີອຳນາດມານປະເພດໃດແດ່ທີ່ກຳລັງຕໍ່ສູ້ວຽກງານຂອງພຣະເຈົ້າໃນສມັຍນີ້?
ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍພຶດຕິການຂອງອຳນາດມານໃນພຣະທັມຕອນນີ້ ແລະພິສູດເບິ່ງສິ່ງທີ່ເກີດຂຶ້ນໃນສມັຍຂອງໂຢຮັນ ແລະສມັຍຂອງພວກເຮົາ.

## ແຜນສຳລັບການສອນ

1. ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1). ອ່ານໜັງສືພິມ ແລະຊອກເບິ່ງເຣື່ອງກ່ຽວກັບຄວາມຊົ່ວຮ້າຍຫລາຍໆຢ່າງໃນປັດຈຸບັນ; ຕັດເອົາເຣື່ອງທີ່ໜ້າສົນໃຈມາເລົ່າສູ່ພວກນັກຮຽນຟັງ. ທ່ານອາດຈະນຳສອງສາມເຣື່ອງສັ້ນມາເພື່ອສົນທະນາກັນເພື່ອເປັນການແນະນຳບົດຮຽນໃນມື້ນີ້.

2. ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2). ຂຽນຫົວຂໍ້ຂອງບົດຮຽນນີ້ໃສ່ກະດານ ຫລືທ່ານອາດຈະພິມໃສ່ກະດາດໄວ້ລ່ວງໜ້າ ແລ້ວເຮັດຫລາຍໆກອບປີ້ເພື່ອຈະຢາຍໃຫ້ນັກຮຽນ. ແນະນຳໃຫ້ນັກຮຽນເບິ່ງບົດຮຽນນຳກັນ (ປົກກະຕິແລ້ວທ່ານຈະຕ້ອງຢາຍບົດຮຽນສຳລັບມື້ນີ້ໃຫ້ທຸກຄົນ). ໃຫ້ຜູ້ນຶ່ງອ່ານ ພຣະນິມິດ 12:1-6. ອະທິບາຍເຣື່ອງຜູ້ຍິງ, ລູກຊາຍຂອງນາງ, ແລະພຍານາກ. ຖາມ: ພຣະທັມຕອນນີ້ສອນແນວໃດແດ່ກ່ຽວກັບເຣື່ອງໄຊຊະນະຂອງໄພ່ພົນຂອງພຣະເຈົ້າ?

3). ອ່ານ ພຣະນິມິດ 12:13-18 ໃຫ້ທຸກຄົນໄດ້ຍິນນຳ. ແນະນຳໃຫ້ນັກຮຽນຂີດກ້ອງຂໍ້ຄວາມໃນບົດຮຽນທີ່ບັລຍາຍເຣື່ອງ "ປີກນົກອິນຊີໃຫຍ່ສອງປີກ" ແລະເຣື່ອງ "ຊົ່ວເວລານຶ່ງ, ສອງເວລາ, ກັບເຄິ່ງເວລາ." ຊີ້ໃຫ້ທຸກເຫັນວ່າພຍານາກຈະຕໍ່ສູ້ກັບລູກຊາຍຂອງຜູ້ຍິງນີ້ຕໍ່ໄປ. ຖາມ: ການຕໍ່ສູ້ຂອງພຍານາກກັບລູກຊາຍຂອງຜູ້ຍິງຈະມີຕໍ່ໆໄປມີຄວາມໝາຍແນວໃດສຳລັບຄຣິສຕຽນໃນສມັຍນີ້?

4). ໃຫ້ຜູ້ນຶ່ງ (ທີ່ອ່ານເກັ່ງ) ອ່ານພຣະນິມິດ 13:1-4 ແລະ 13:11-18 ໃຫ້ທຸກຄົນໄດ້ຍິນນຳ. ເວົ້າເຣື່ອງການບັງຄັບໃຫ້ຂາບໄຫວ້ຈັກພັດ ແລະເຣື່ອງກຸ່ມຄວາມເຊື່ອປອມ ທີ່ຖືກໃຊ້ໃຫ້ເປັນເຄື່ອງມືເພື່ອປະກາດວ່າຈັກພັດແມ່ນພຣະເຈົ້າ. ແນະນຳໃຫ້ນັກຮຽນຂີດກ້ອງຄຳອະທິບາຍເຣື່ອງເຄື່ອງໝາຍຕ່າງໆໃນບົດຮຽນ.

### 3. ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

5). ແບ່ງເວລາເພື່ອໃຫ້ນັກຮຽນຕອບຄຳຖາມທັງສີ່ຂໍ້ໃນຕອນສຸດທ້າຍຂອງບົດຮຽນນີ້. ອ້າງເຖິງຂ່າວຕ່າງໆທີ່ໄດ້ເວົ້າກັນໃນຂໍ້ 1, ຖາມ: ມີຫຍັງແດ່ທີ່ໃຫ້ຄວາມໝັ້ນໃຈກັບຄຣິສຕຽນ ທີ່ອາດຈະປະສົບບັນຫາແນວດຽວກັນ ວ່າພວກເຂົາເຈົ້າຈະມີຊັຍຊະນະໃນຊີວິດ? ໃຫ້ຜູ້ນຶ່ງທີ່ມີປະສົບການໃນເຣື່ອງນີ້ເປັນພຍານວ່າພຣະເຈົ້າໄດ້ຊ່ວຍເຂົາໃຫ້ມີຊັຍຊະນະຕໍ່ຄວາມຊົ່ວຮ້າຍແນວໃດ. ໃຫ້ແຕ່ລະຄົນຄິດເຖິງສິ່ງນຶ່ງທີ່ພວກເຂົາກຳລັງປະສົບຢູ່ໃນປັດຈຸບັນ ຊຶ່ງເຫັນວ່າເປັນການຕໍ່ຕ້ານຈາກອຳນາດຊົ່ວຮ້າຍ. ຊັກຊວນທຸກຄົນໃຫ້ອ້ອນວອນຂໍຊັຍຊະນະຈາກພຣະເຈົ້າໃນຂະນະທີ່ມີການອະທິຖານປິດການສຶກສາພຣະທັມໃນມື້ນີ້.

# ບົດແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ຊົງພິພາກສາອຳນາດມານ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 14:1-13
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພຣະນິມິດ 14
ຈຸດສຳຄັນຂອງບົດຮຽນນີ້: ໄພ່ພົນຂອງພຣະເຈົ້າສາມາດໝັ້ນໃຈໄດ້ວ່າພຣະເຈົ້າຈະຊົງພິພາກສາຜູ້ທີ່ຕໍ່ຕ້ານພວກເຂົາ.
ຄຳຖາມເພື່ອການສຳຣວດ: ການຕິດຕາມພຣະເຈົ້າຈະມີຫຍັງດີແດ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອພິຈາຣະນາເບິ່ງຄຳສອນໃນພຣະທັມຕອນນີ້ ກ່ຽວກັບການພິພາກສາຂອງພຣະເຈົ້າ.

## ແຜນສຳລັບການສອນ

1. ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1). ບອກໃຫ້ນັກຮຽນເປີດເບິ່ງບົດຮຽນນຳກັນ (ກອບປີ້ບົດຮຽນສຳລັບມື້ນີ້ເພື່ອນັກຮຽນທຸກຄົນ). ອ່ານຄຳນຳແລະເນັ້ນຕອນທີ່ເວົ້າເຖິງ "ການຢຳເກງພຣະເຈົ້າ..." ໃຫ້ເວລາສຳລັບການສົນທະນາ ແລະການຖາມສະເພາະໃນຄຳນຳ. ທ່ານອາດຈະໃຫ້ບາງຄົນຕອບຄຳສົນໃຈຂອງເພື່ອນນັກຮຽນ.

2. ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2). ຕຽມໂປສເຕີ້ ຫລືຂຽນໃສ່ກະດານຄວາມໝາຍຂອງເຄື່ອງໝາຍຕ່າງໆຈາກບົດຮຽນທີ່ຜ່ານມາເພື່ອເປັນການລື້ມຄືນສຳລັບຂໍ້ຄວາມຕໍ່ໄປນີ້:

- ຜູ້ຍິງ-- ໄພ່ພົນຂອງພຣະເຈົ້າ
- ພະຍານາກ-- ຊາຕານ
- ລູກຂອງຜູ້ຍິງ-- ພຣະເຢຊູ
- ສັດຮ້າຍຂື້ນຈາກທະເລ-- ຈັກພັດຂອງໂຣມ
- ສັດຮ້າຍຂື້ນຈາກດິນ-- ກຸ່ມຄວາມເຊື່ອປອມທີ່ສົ່ງເສີມການຂາບໄຫວ້ຈັກພັດ

ຕຽມໂປສເຕີ້ອັນທີສອງ ຫລືຂຽນໃສ່ກະດານອີກມຸມນຶ່ງ ເຄື່ອງໝາຍຕ່າງໆທີ່ມີໃນບົດຮຽນມື້ນີ້ດັ່ງຕໍ່ໄປນີ້:

- ພຣະເມສານ້ອຍ
- ພູຊີໂອນ
- 144,000
- ເພງໃໝ່
- ບາບີໂລນມະຫານະຄອນ
- ເຫລົ້າແວງແຫ່ງພຣະພິໂຣດຂອງພຣະອົງ

ລື້ມຄືນເບິ່ງຄວາມໝາຍຂອງເຄື່ອງໝາຍທັງຫລາຍຈາກບົດຮຽນທີ່ຜ່ານມາ. ຂຽນເຄື່ອງໝາຍຈາກບົດຮຽນນີ້ ເວລາບັລຍາຍຕອນທີ່ກ່ຽວຂ້ອງ. ທ່ານອາດຈະປິດໄວ້ກ່ອນແລ້ວຄ່ອຍເປີດໃຫ້ເບິ່ງເທື່ອລະຢ່າງໄປພ້ອມໆກັບຄຳບັລຍາຍ.

3). ອ່ານພຣະນິມິດ 14:1. ອະທິບາຍບົດຮຽນ; ປຽບທຽບຄົນຈຳນວນ144,000 ຄົນທີ່ມີຊື່ຂອງພຣະເມສານ້ອຍແລະຊື່ຂອງພຣະເຈົ້າທີ່ໜ້າຜາກ ກັບຄົນຈຳພວກທີ່ມີຊື່ແລະນ້ຳເບີຂອງສັດຮ້າຍ (13:16-18) ທີ່ມືຂວາ ຫລືເທິງໜ້າຜາກ. ຖາມ: <u>ເປັນຫຍັງການຕິດຕາມສັດຮ້າຍຈຶ່ງງ່າຍກວ່າການຕິດຕາມພຣະເມສານ້ອຍໃນສັຕວັດທີນີ້ງ</u>? <u>ເປັນຫຍັງຫລາຍຄົນຍັງລັງເລໃຈທີ່ຈະຕິດຕາມພຣະເມສານ້ອຍໃນສມັຍນີ້</u>?

4). ຫລັງຈາກການຕອບຄຳຖາມໃນຂໍ້ 3 ແລ້ວ, ຊັກຊວນນັກຮຽນໃຫ້ເບິ່ງສິ່ງທີ່ດີກວ່າສຳລັບຜູ້ຄົນທີ່ຢູ່ໃນຈຳພວກ 144,000 ຄົນ, ອ່ານ ພຣະນິມິດ 14:2-5. ໃຫ້ເວລານັກຮຽນເພື່ອຕອບ ແລ້ວຈຶ່ງອະທິບາຍບົດຮຽນເຣື່ອງຄວາມແຕກຕ່າງໃນຊີວິດຂອງຜູ້ຄົນ (ຄຣິສຕຽນ) ທີ່ຕິດຕາມພຣະເຢຊູຄຣິດໃນສັຕວັດທີນີ້ງ.

5). ອ່ານພຣະນິມິດ 14:6 ແລະໃຊ້ບົດຮຽນເພື່ອອະທິບາຍຄວາມໝາຍເຣື່ອງເທວະດາຕົນນຶ່ງທີ່ "ບິນຢູ່ໃນທ້ອງຟ້າ" ແລະມີຂ່າວປະເສີດເພື່ອປະກາດແກ່ທຸກໆຄົນ. ອ່ານຂ່າວຄາວຈາກເທວະດາໃນຂໍ້ 7 ແລະຖາມວ່າ, ແມ່ນຫຍັງສາມຢ່າງທີ່ເທວະດາໄດ້ບອກໃຫ້ຄົນເຮັດ? ( ຢຳເກງພຣະເຈົ້າ, ຖວາຍພຣະກຽດແດ່ພຣະອົງ, ນະມັສການພຣະອົງ ). ອ່ານຂ່າວຄາວຈາກເທວະດາຕົນທີສອງໃນຂໍ້ 8 ແລະອະທິບາຍຄວາມສຳຄັນຂອງການຫລົ້ມຈົມຂອງບາບີໂລນມະຫານະຄອນ. ອ່ານຂ່າວຄາວຈາກເທວະດາຕົນທີສາມ ແລະຊີ້ໃຫ້ທຸກຄົນເຫັນເຖິງຄຳພິພາກສາສຳລັບຜູ້ທີ່ຕິດຕາມສັດຮ້າຍ ແລະຮູບຂອງມັນ.

6). ອ່ານພຣະນິມິດ 14:12-13. <u>ຖາມ</u>, <u>ເປັນຫຍັງຂໍ້ຄວາມເຫລົ່ານີ້ຈຶ່ງມີຄວາມໝາຍຫລາຍສຳລັບຄຣິສຕຽນໃນສັຕວັດທີນີ້ງ</u>? <u>ເປັນຫຍັງຖ້ອຍຄຳນີ້ຈຶ່ງກາຍມາເປັນສິ່ງໜູນໃຈສຳລັບຄຣິສຕຽນໃນປັດຈຸບັນ</u>?

## 3. <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7). ຖາມຄຳຖາມຂໍ້ທີ 4 ຈາກຕອນທ້າຍຂອງບົດຮຽນ. ຫລັງຈາກມີການຕອບແລ້ວໃຫ້ຖາມຂໍ້ທີ 2. ຫລັງຈາກມີການຕອບແລ້ວໃຫ້ເບິ່ງປະໂຍກສຸດທ້າຍຂອງບົດຮຽນ (ກ່ອນຄຳຖາມ). ໃຫ້ແຕ່ລະຄົນຂີດກ້ອງຂໍ້ຄວາມສີ່ຢ່າງທີ່ໃຫ້ໄວ້ໃນຄຳຕອບສຳລັບຄຳຖາມ, <u>ການຕິດຕາມພຣະເຈົ້າຈະມີຫຍັງດີແດ່</u>?

# ບົດແນະນຳຄຣູສອນ
## ບົດຮຽນທີ 10
## ພຣະພິໂຣດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 15:1-8; 16-21
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ພຣະນິມິດ 15-16
ຈຸດສຳຄັນຂອງບົດຮຽນນີ້: ຄວາມທຸກໂສກຈະກາຍເປັນຄວາມຊຶມຊື່ນຍິນດີ.
ຄຳຖາມເພື່ອການສຳຣວດ: ເຮົາໄດ້ຕັ້ງໝັ້ນຄົງໃນຄວາມເຊື່ອຢ່າງແທ້ຈິງ
ຈຸດປະສົງຂອງບົດຮຽນນີ້: ວິບັດເປັນເຄື່ອງບອກເຕືອນວ່າພຣະເຢຊູຈະສະເດັດມາ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ປະມານ 65 ປີ ຫລັງຈາກພຣະເຢຊູຄືນພຣະຊົນແລະກັບຂຶ້ນໄປສວັນທັງເປັນ ມີຫລາຍຄົນໄດ້ເຫັນເຫດການນີ້ຈຶ່ງເລົ່າຕໍ່ກັນມາຈົນເຖິງພວກລູກຫລານ ແລະພວກລູກຫລານພາກັນເຊື່ອໃນອົງພຣະເຢຊູຄຣິດຫລາຍຂຶ້ນ ພ້ອມທັງຮຽນຮູ້ວ່າພຣະເຢຊູຈະສະເດັດກັບມາອີກໃນບໍ່ຊ້ານີ້ ການສະເດັດກັບມາຂອງພຣະອົງຈະເປັນຄືການສະເດັດຂຶ້ນໄປຍັງສວັນເມື່ອ 65 ປີກ່ອນນີ້ ພຣະອົງຈະກັບມາຕັດສິນລົງໂທດຜູ້ບໍ່ເຊື່ອແລະຜູ້ກົດຂີ່ຂົ່ມເຫງໄພ່ພົນຂອງພຣະອົງ ແລະພຣະອົງຈະໂຜດຜູ້ທີ່ເຊື່ອໃນພຣະອົງທີ່ຮັບຄວາມທຸກຍາກລຳບາກໃນເວລານີ້ໃຫ້ພົ້ນ.

1. ຂໍໃຫ້ຜູ້ນຶ່ງອ່ານ 15:1-4 ທະເລວິບັດ
   ກ. ເລກ 7 ເປັນເລກຂອງພຣະເຈົ້າກຳນົດ.
   ຂ. ເທວະດາທັງເຈັດພ້ອມທີ່ຈະປະຕິບັດຕາມຄຳສັ່ງຂອງພຣະເຈົ້າ.
   ຄ. ສັດຮ້າຍ ແມ່ນພວກຕໍ່ຕ້ານພຣະເຈົ້າ
   ງ. ທະເລແກ້ວແມ່ນພຣະໂລຫິດອັນປະເສີດອັນກວ້າງໃຫຍ່ໄພສານ ສາມາດຊຳຣະລ້າງຄວາມຜິດບາບຂອງຄົນທັງໂລກ.
   ຈ. ຄົນທັງຫລາຍທີ່ຢືນຢູ່ແຄມທະເລແກ້ວແມ່ນຄົນທີ່ຮັບການຊຳຣະລ້າງແລ້ວ.
   ສ. ທະເລປົນກັບໄຟ ແມ່ນພຣະໂລຫິດປະກອບດ້ວຍພຣະວິນຍານບໍຣິສຸດທີ່ຊຳຣະລ້າງວິຫານຂອງພຣະອົງ.
   ຊ. ພຣະເມສານ້ອຍ ແມ່ນລູກນ້ອຍຂອງພຣະເຈົ້າ (ພຣະບຸດອົງດຽວຂອງພຣະເຈົ້າ).

໒. <u>ຂໍໃຫ້ຜູ້ນຶ່ງອ່ານ 15:5-8 ວິບັດເລີ້ມຕົ້ນຈາກພວກເຮົາ</u>

ກ. ຜ້າກັ້ງໃນພຣະວິຫານໄຂອອກ ແມ່ນຂ່າວປະເສີດຖືກເປີດເຜີຽບໍ່ມີຄໍາອຸປະມາອີກຕໍ່ໄປ.

ຂ. ເທວະດາຖືພັຍອັນຕະລາຍທັງເຈັດ ແມ່ນອັນຕະລາຍສໍາລັບຄົນຕໍ່ສູ້ພຣະຄຣິດ.

ຄ. ພຣະວິຫານເຕັມໄປດ້ວຍຄວັນ ແມ່ນພຣະວິນຍານຂອງພຣະເຈົ້າປົກຄຸມຢູ່.

ງ. ພຣະວິນຍານປົກຄຸມເພື່ອຄຸ້ມຄອງປົກປັກຮັກສາບໍ່ໃຫ້ຜູ້ໃດທໍາລາຍພຣະວິຫານ, ຫລືທໍາລາຍຄົນໃນ
ພຣະວິຫານ.

3. <u>ຂໍໃຫ້ຜູ້ນຶ່ງອ່ານ 16:1໒-16</u>

ກ. ອະທິບາຍຄວາມຍາວຂອງແມ່ນໍ້າ.

ຂ. ເທວະດາຖອກນໍ້າໃນຂັນຂອງເພິ່ນລົງໃນນໍ້າໆບໍ່ເພີ້ມແຕ່ກັບແຫ້ງ.

ຄ. ນໍ້າແຫ້ງຄືຕອນເອຢິບຂ້າມທະເທ.

ງ. ແຫ້ງເພື່ອຈັດຕຽມທີນທາງໄພ່ພົນຂອງພຣະອົງໃຫ້ເຕົ້າໂຮມກັນ ແລະເປັນສົງຄາມຄັ້ງສຸດທ້າຍ.

4. <u>ຂໍໃຫ້ຜູ້ນຶ່ງອ່ານ 16:17-໒1</u>

ກ. ເຈົ້ານາຍແຫ່ງອາກາດ ແມ່ນວິນຍານຊົ່ວຮ້າຍທີ່ຄອບຄອງຈິດໃຈມະນຸດ

ຂ. ສໍາເຣັດແລ້ວ ແມ່ນພວກຊາຕານຈະຖືກປາບລົງ.

ຄ ຟ້າແມບທີ່ບໍ່ເຄີຽມີມາກ່ອນເປັນດ້ວຍຣິດອໍານາດຂອງພຣະເຈົ້າ.

ງ. ສຽງຕ່າງໆຮ້ອງໃສ່ກັນ ແມ່ນສຽງຜູ້ເຊື່ອຮ້ອງສັຣເສີນ, ສຽງຜູ້ບໍ່ເຊື່ອຮ້ອງຂໍຄວາມເມດຕາ,
ແລະສຽງເຂົາປ້ອຍດ່າພຣະເຈົ້າ.

ຈ. ແຍກຝູງແກະອອກຈາກຝູງແບ້ ແມ່ນແຍກຄົນສິນທັມ ແລະອະທັມ ອອກຈາກກັນ.

ສ. ການທໍາລາຍຂອງພຣະເຈົ້າຈົນພູເຂົາໃຫຍ່ກໍຫາບໍ່ພົບ.

<u>ຄໍາຖາມ:</u>

1. ເປັນຫຍັງພຣະເຈົ້າຈຶ່ງເປີດເຜີຽເຣື່ອງນີ້ໃຫ້ໂຢຮັນຮູ້?

໒. ເມື່ອທ່ານຮູ້ເຣື່ອງທີ່ຈະເກີດຂຶ້ນນີ້ແລ້ວທ່ານຈະເຮັດແນວໃດ?

3. ໃນອາທິດນີ້ທ່ານຈະຕັດສິນໃຈບອກເຣື່ອງນີ້ແກ່ໃຜແດ່?

<u>ບົດແນະນຳຄູສອນ</u>

<u>ບົດຮຽນທີ 11</u>

# <u>ນະຄອນບາບີໂລນຫລົ້ມຈົມ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ພຣະນິມິດ 17:16; 18:1-8

<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> ພຣະນິມິດ 17-19:5

<u>ຈຸດສຳຄັນຂອງບົດຮຽນນີ້:</u> ໃຊ້ເງິນແລະໃຊ້ອຳນາດຜິດ ເປັນຫົນທາງໄປສູ່ການພິພາກສາ

<u>ຄຳຖາມເພື່ອການສຳຣວດ:</u> ເຮົາໃຊ້ເງິນຄຳແລະໃຊ້ອຳນາດຢ່າງໃດຈຶ່ງຮູ້ວ່າຜິດ.

<u>ຈຸດປະສົງຂອງບົດຮຽນນີ້:</u> ກຸງບາບີໂລນທີ່ຮັ່ງມີຍັງຖືກທຳລາຍ

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ເພື່ອປະຕິບັດຕາມພຣະບັດຍັດໂດຍເຮັດຕາມແບບຢ່າງຂອງພຣະເຢຊູ.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.

## <u>ບົດນຳ</u>

ບາບີໂລນແມ່ນເມືອງເອກຂອງ ເມໂຊໂປຕາເມັຽໃນສມັຍບູຮານ ສ່ວນສມັຍນີ້ເອີ້ນວ່າປະເທດອີຣັກ, ເປັນແຜ່ນດິນໃຫຍ່ ແລະສວຍງາມຂອງຕາເວັນອອກກາງ. ບາບີໂລນໃນສມັຍນັ້ນຢູ່ໃຕ້ການປົກຄອງຂອງຈັກກະພັດໂຣມ ທີ່ບັງຄັບໃຫ້ປະ ຊາຊົນຂາບໄຫວ້ຈອມຈັກກະພັດໂຣມັນ, ແລະບັງຄັບປະຊາຊົນໃຫ້ຂາບໄຫວ້ພຣະປັ້ນຂອງໂຣມັນ ຫາກຜູ້ໃດບໍ່ຂາບ ໄຫວ້ຈະຕ້ອງລົງໂທດເຖິງຕາຍ, ພວກເຂົາຈັບກຸມຂົ່ຽນຕີຂົ່ມເຫັງຄຣິສຕຽນໃຫ້ເຂົາເຊື່ອພຣະເຈົ້າອົງທ່ຽງແທ້. ພຣະຜູ້ ເປັນເຈົ້າຊົງອົດກັ້ນໄວ້ນານ ແລະຊົງໃຊ້ເທວະດາຂອງພຣະອົງລົງມາໃຫ້ນິມິດແກ່ໂຢຮັນໃນເຣື່ອງພຣະອົງຈະຊົງຊ່ອຍ ໄພ່ພົນຂອງພຣະອົງໃຫ້ພົ້ນຈາກການຂົ່ມເຫງ ແລະລົງໂທດບາບີໂລນ. ເທວະດາຂອງພຣະເຈົ້າເຊີນໂຢຮັນໄປເບິ່ງເຫດ ການລ່ວງໜ້າທີ່ມີຍິງໂສເພນີເປັນຕົວສາຣະຄະດີໃນເຣື່ອງນີ້;

1. <u>ເມື່ອນຳພານັກຮຽນອ້ອນວອນແລ້ວ ເຊີນນັກຮຽນຄິດວາດພາບແຕ້ມຮູບຜູ້ຮ້າຍຕາມຄວາມຄິດຂອງເຂົາເຈົ້າ.</u>
   ກ. ຈາກນັ້ນຄຣູເລົ່າບົດນຳໃນບົດສອນນີ້
   ຂ. ເລົ່າບົດນຳໃນບົດສອນ.

2. <u>ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ17:1-6 ອຳນາດອັນສຍອງຂວັນ</u>
   ກ. ບາບີໂລນມີສະພາບດຽວກັບນາງ ເຢຊາເບັນ ໂສເພນີຈາກບາບີໂລນ. ຍິງໂສເພນີຖືເປັນຄົນຫລົ້ມຊູ້ ເພາະ ວ່າໄປຢູ່ກິນກັບຜູ້ຊາຍຫລາຍຄົນ, ຊາຍທີ່ມີເມັຍແລ້ວ, ນອນກັບຊາຍກ່ອນແຕ່ງງານ ແລະອື່ນໆ.
   ຂ. ນັ່ງຢູ່ເທິງແມ່ນ້ຳອັນຫລວງຫລາຍ ຄຳແປຢູ່ຂໍ້ 15.
   ຄ. ເທວະດານຳໂຢຮັນເຂົ້າໄປໃນປ່າໂດຍພຣະວິນຍານຂອງພຣະເຈົ້າ (ໂຢຮັນໄປທາງນິມິດບໍ່ແມ່ນທາງຮ່າງ

ກາຍ)

ງ. ສັດຮ້າຍສີແດງເຂັ້ມ ມີຄຳໝິ່ນປມາດແປວ່າ ນາງນັ່ງຢູ່ຢ່າງສະບາຍກັບພວກເຈົ້າຊີວິດ ແລະເຈົ້ານາຍທັງຫລາຍທີ່ໝິ່ນປມາດພຣະເຈົ້າ (ຂໍ້ 3ກ).

ຈ. ສັດຮ້າຍເຈັດຫົວ ແລະສິບເຂົາ ແມ່ນອຳນາດຂອງເຈົ້ານາຍທີ່ປຽບໃສ່ສັດຮ້າຍ (ຂໍ້ 3ຂ).

ສ. ຍິງໂສເພນີນຸ່ງເຄື່ອງສີມ່ວງ ໝາຍເຖິງຄົນຊົ່ວກຳລັງໄດ້ຮັບກຽດຕິຍົດ ທີ່ປະດຳດ້ວຍຊັບສິນຕ່າງໆ(ຂໍ້ 4ກ)

ຊ. ມືຂອງໂສເພນີຖືຈອກທີ່ເຕັມໄປດ້ວຍສິ່ງໜ້າຂີ້ດຽດ ໝາຍເຖິງກຳລັງເຮັດບາບເຮັດຊົ່ວຢູ່ (ຂໍ້ 4ຂ).

ຍ. ໜ້າຜາກມີຊື່ຂຽນໄວ້ ໝາຍຄວາມວ່າ ພຣະເຈົ້າປະກາດຄວາມຊົ່ວຂອງບາບີໂລນ (ຂໍ້ 5).

ດ. ຍິງນັ້ນເມົາມົວດ້ວຍເລືອດຂອງໄພ່ພົນພຣະເຈົ້າ ໝາຍເຖິງການຂົ່ມເຫງໄພ່ພົນພຣະເຈົ້າ (ຂໍ້ 6).

3. <u>ຂໍໃຫ້ຜູ້ນຶ່ງອ່ານ 18:1-3 ເທວະດາປະກາດວ່າບາບີໂລນຫລົ້ມ</u>

ກ. ເທວະດາອີກຕົນນຶ່ງທີ່ມີຣັສມີຈົນແຜ່ນດິນໂລກສວ່າງມາປະກາດການທຳລາຍບາບີໂລນ (ຂໍ້ 1).

ຂ. ປະກາດດ້ວຍສຽງສນັ່ນວ່າ ບາບີໂລນມະຫານະຄອນຫລົ້ມຈົມ. (ຂໍ້ 2ກ). ອ່ານເອຊາຢາ 21

ຄ. ບາບີໂລນເປັນບ່ອນອາສັຍຂອງຜີຖ່ອຍຮ້າຍ (ວິນຍານຊົ່ວຮ້າຍ), ສັດຮ້າຍຕ່າງ. ສິ່ງເຫລົ່ານີ້ເປັນອີກເຫດຜົນອີກອັນນຶ່ງໃຫ້ພຣະເຈົ້າທຳລາຍ. (ຂໍ້ 2ຂ).

ງ. ນະຄອນບາບີໂລນມີການຊົ່ວຮ້າຍເສບສຸຣາ, ຫລິ້ນຜິດຊາຍຍິງ, ໂອ້ອວດຄວາມຮັ່ງມີ.

4. <u>ຂໍໃຫ້ຜູ້ນຶ່ງອ່ານ 18:4-8 ສຽງປະກາດເພື່ອຄົນຂອງພຣະເຈົ້າ</u>

ກ. ພາສາລາວບອກວ່າພຣະສຸຣະສຽງປະກາດມາຈາກສວັນ.

1. ໃນພາສາອັງກິດບອກວ່າໂຢຮັນໄດ້ຍິນອີກສຽງນຶ່ງ ໝາຍຄວາມວ່າບໍ່ແມ່ນສຽງຂອງເທວະດາຕົນນັ້ນ.
2. ຫາກບໍ່ແມ່ນສຽງຂອງເທວະດາ ກໍຕ້ອງແມ່ນສຽງພຣະຜູ້ເປັນເຈົ້າແນ່ນອນ ຕາມພຣະຄັມພີລາວ.
3. ເພິ່ນຮ້ອງອອກມາເພາະວ່າໄພ່ພົນຂອງພຣະອົງຍັງໃຊ້ຊີວິດໃນໂລກນີ້ປະປົນກັບຄົນທົ່ວໄປ.

ຂ. ສຽງປະກາດນັ້ນເປັນສຽງທີ່ມີອຳນາດເອີ້ນທາງຈິດວິນຍານທີ່ເຮັດໃຫ້ໄພ່ພົນຂອງພຣະອົງຮູ້ວ່າເປັນສຽງຂອງອົງພຣະຜູ້ເປັນເຈົ້າດັ່ງໃນ ໂຢຮັນ 10:27.

ຄ. ໃນເວລາດຽວກັນທີ່ເພິ່ນຮ້ອງອອກມານັ້ນລາງຄົນຈະໄດ້ຮັບໂທດ ລາງຄົນຈະໄດ້ຮັບລາງວັນ.

ງ. ຄວາມບາບຂອງບາບີໂລນສູງພຽງຟ້າ ຄວາມໂກດຮ້າຍຂອງພຣະເຈົ້າກໍຈະລົງຈາກຟ້າມາເຖິງດິນ.

ຈ. ບາບີໂລນຈະໄດ້ຮັບໂທດສອງເທົ່າທີ່ເຂົາເຮັດ.

ສ. ຄວາມອວດຕົວຂອງເຂົາຫລາຍປານໃດ ຄວາມທຸກໂສກກໍຈະໄດ້ຮັບຫລາຍປານນັ້ນ.

ຊ. ນະຄອນນີ້ຫລົ້ມຈົມບໍ່ແມ່ນຍ້ອນພຣະເຈົ້າຢາກທຳລາຍ, ທີ່ພຣະອົງທຳລາຍກໍເພາະເຂົາຊົ່ວ.

ອ້ອນວອນຂອບພຣະຄຸນພຣະເຈົ້າທີ່ຊົງເອີ້ນເຮົາທັງຫລາຍອອກມາກ່ອນຄືທຸກວັນນີ້.

# ບົດແນະນຳຄູສອນ
# ບົດຮຽນທີ 12
# ພຣະເຈົ້າຈອມຣາຊາ

---

| | |
|---|---|
| ຂໍ້ພຣະຄັມພີສຳລັບບົດຮຽນນີ້: | ພຣະນິມິດ 19:11-20:10 |
| ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: | ພຣະນິມິດ 19:6-20:15 |
| ຈຸດສຳຄັນຂອງບົດຮຽນນີ້: | ເພື່ອບອກໃຫ້ຮູ້ວ່າພຣະເຢຊູປາບຊາຕານຢ່າງບໍ່ເຫລືອ |
| ຄຳຖາມເພື່ອການສຳຣວດ: | ເຣື່ອງນີ້ຈະຈົບລົງຍາມໃດ? |
| ຈຸດປະສົງຂອງບົດຮຽນນີ້: | ເພື່ອອະທິບາຍພຣະເຢຊູປາບຊາຕານໃນວັນສຸດທ້າຍ |

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ເທວະດາໄດ້ສຳແດງໃຫ້ໂຢຮັນເຫັນເຖິງຄາວສຸດທ້າຍຂອງໂລກ ພຣະເຈົ້າຈະປາບພະຍາມານ ແລະພັກພວກຂອງມັນ ໂດຍມັດພວກມັນຖິ້ມລົງບຶງໄຟມະຣົກຫລືເຫວເລິກທີ່ໂຢຮັນໄດ້ເຫັນ ພວກມັກຈະຖືກມັດແລະຂັງໄວ້ໃນບຶງໄຟນັ້ນເປັນເວລາ 1000 ປີ ແລະກໍປ່ອຍມັນອອກມາອີກຊົ່ວຄາວ, ຢຮັນບໍ່ໄດ້ບອກພວກເຮົາວ່າເປັນຫຍັງພຣະເຈົ້າຈຶ່ງປ່ອຍມັນອີກ. ໃນ ຂະນະທີ່ພະຍາມານຖືກມັດຖິ້ມລົງບຶງໄຟນັ້ນ ພວກໄພ່ພົນຂອງພຣະເຈົ້າຈະເປັນຜູ້ພິພາກສາ ແລະຄອບຄອງຮ່ວມກັບ ພຣະເຢຊູຄຣິດ. ໃນພຣະທັມຕອນນີ້ໄດ້ເວົ້າເລິກໄປເຖິງເຣື່ອງ Premillennialism, Amillennialism, Post - millenialism ເປັນເຣື່ອງຂອງຍກ 1000 ປີ ພະຍາມານຖືກຈັບ, ພະຍາມານຖືກປ່ອຍ ແຕ່ເນື່ອງຈາກວ່າເຣື່ອງນີ້ຕ້ອງ ເວົ້າກັນຍາວນານ ຂ້າພະເຈົ້າຈຶ່ງບໍ່ຂໍນຳທ່ານໄປເຖິງເຣື່ອງນີ້.

1. ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 19:11-16 ຊົງປະທັບເທິງຫລັງມ້າຂາວ

ກ. ຂີ່ມ້າໃນສມັຍບູຮານແມ່ນການສູ້ຮົບ (ຂໍ້ສັງເກດພຣະເຢຊູຂີ່ລໍເຂົ້າກຸງເຢຣູຊາເລັມ ແມ່ນສັນຕິສຸກ).
ຂ. ມ້າຂາວແມ່ນສົງຄາມດ້ວຍຄວາມຍຸດຕິທັມ.
ຄ. ພຣະເຢຊູຊົງປະທັບເທິງຫລັງມ້າ ມີຊື່ວ່າ ສັດຊື່ ແລະທ່ຽງທັມ.
ງ. ພະຍານາກເຄີຽຢູ່ໃນສວັນ ມັນຈຶ່ງມີອຳນາດ.
ຈ. ພະຍານາກ ກັບບໍຣິວານຂອງມັນຈະສູ້ຮົບແລະເສັຽຊັຍ.
ສ. ພຣະເຢຊູປະກາດຄວາມເປັນພຣະຂອງພຣະເຈົ້າຂອງເຈົ້າ ທີ່ເຄື່ອງທົງ ແລະທີ່ຫນ້າເອິກຂອງພຣະອົງ.

2. ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 19:17-21 ຊະຕາກັມຂອງສັດຮ້າຍ

ກ. ເທວະດາປະກາດຊັຍຊະນະໂດຍບອກພວກນົກຕຽມກິນເນື້ອ.
ຂ. ພວກສັດຮ້າຍພະຍານາກ, ມັງກອນ ແລະສັດຮ້າຍອື່ນໆ ຈະຖືກຖິ້ມລົງບຶງໄຟ.

ຄ. ຜູ້ປະກາດພຣະທັມປອມ ແລະຄົນຂາບໄຫວ້ສັດຮ້າຍ ຫລືຮູບສັດຮ້າຍກໍຈະຖືກຖິ້ມລົງບຶງໄຟ.

ງ. ຄົນເຮັດໝາຍສຳຄັນຫລອກລວງໃຫ້ຄົນເຊື່ອຖືສັດຮ້າຍ ກໍຈະຖືກລົງບຶງໄຟ. (ຂ້າພະເຈົ້າເຂົ້າໃຈວ່າແມ່ນບັນດາພວກໝໍເວດມົນຄາຖາຕ່າງໆ).

ຈ. ຄົນທີ່ຍັງບໍ່ທັນຕາຍກໍຈະຖືກແສງພຣະທັມແລ້ວຕາຍ.

3. <u>ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 20: 1-3 ຊະຕາກັມຂອງຊາຕານ</u>

ກ. ເທວະດາຂອງພຣະເຈົ້າຕຽມກະແຈແລະໂສ້ມັດຊາຕານ.

ຂ. ພະຍາມານແລະພັກພວກຈະຖືກມັດແລະຖິ້ມລົງບຶງໄຢ 1000 ປີ.

ຄ. ຫລັງຈາກພັນປີພວກມັນຈະຖືກປ່ອຍອີກເປັນການຊົ່ວຄາວ.

4. <u>ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 20:4-6 ຄົນທີ່ເຊື່ອໄວ້ວາງໃຈພຣະເຈົ້າ</u>

ກ. ບັນລັງຫລາຍອັນ ແມ່ນບັນລັງຂອງສາວົກ 12 ຄົນ ເພື່ອພິພາກສາອິສຣາເອັນ 12 ຕະກຸນ.

ຂ. ວິນຍານພວກທີ່ຖືກຕັດຄໍຍ້ອນການປະກາດເຣື່ອງພຣະເຢຊູຈະເປັນຜູ້ພິພາກສາໂລກ

ຄ. ຄົນທີ່ອົດທຸກທໍຣະມານຮ່ວມກັບພຣະເຢຊູຄຣິດຈະໄດ້ສເວີຍສຸກຮ່ວມກັບພຣະອົງ.

<u>ຄຳຖາມ:</u>

1. ທ່ານຄິດວ່າໃນຄາວສຸດທ້າຍຈະເປັນທີ່ຊົມຊື່ນຍິນດີ ຫລືຄວາມທຸກໂສກກັນແທ້?

2. ໂປໂລບອກໃນ 1ໂກຣິນໂທ 6 ເຮົາຕ້ອງຮຽນຕັດສິນເຣື່ອງໃນໂລກນີ້ ທ່ານຄິດວ່າແນວໃດ?

3. ທ່ານຕຽມພ້ອມທີ່ຈະເປັນຄົນຕັດສິນໃນວັນນັ້ນແລ້ວບໍ່?

# ບົດແນະນຳຄູສອນ
# ບົດຮຽນທີ 13
# ຟ້າໃໝ່ແຜ່ນດິນໃໝ່

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 21:1- 22:21
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ພຣະນິມິດ 21-22
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າພຣະເຈົ້າຊົງໂຜດປະທານສິ່ງໃໝ່ແກ່ທຸກຄົນ
ຄຳຖາມເພື່ອການສຳຣວດ: ທຸກສິ່ງຈະກາຍເປັນສິ່ງໃໝ່ໄດ້ຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍນິມິດເຣື່ອງທ້ອງຟ້າໃໝ່ແລະແຜ່ນດິນໃໝ່.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ພຣະນິມິດ 21-22 ເປັນນິມິດຕອນຈົບຂອງໂຢຮັນ ດ້ວຍຄວາມຊົມຊື່ນຍິນດີ ຄືພຣະເຈົ້າໄດ້ເຮັດຕາມພຣະສັນຍາຂອງພຣະອົງຄືຊີວິດຕລອດໄປເປັນນິດໂດຍເຮັດໃຫ້ທຸກຢ່າງກາຍເປັນສິ່ງໃໝ່ອີກ ແລະຍັງນຳຄົນທີ່ເຊື່ອໃນພຣະອົງໃຫ້ມາຢູ່ຕໍ່ໜ້າພຣະອົງ ແລະເພື່ອໄປສເວີຍສຸກຮ່ວມກັບພຣະອົງ.

1. ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 21:1-8
   ກ. ອູຣາໂນສ ພາສາກຣີກ ແປວ່າທ້ອງຟ້າອາກາດ ຫລືສວັນ, ບົດຮຽນນີ້ນີ້ເວົ້າເຣື່ອງທ້ອງຟ້າໃໝ່.
   ຂ. ກຸ່ມທີ່ເຊື່ອວ່າໂລກນີ້ຍັງຄົງຢູ່, ສວັນນັ້ນຢູ່ໃນໂລກໂດຍອ້າງເຖິງ 2 ໂກຣິນໂທ 5:17 ເທົ່ານັ້ນ.
   ຄ. ໂລກນີ້ຈະຖືກເຜົາຜານໃນ 2 ເປໂຕ 3:7-11
   ງ. ພາບພົດຂອງເຢຣູຊາເລັມໃໝ່ຄ້າຍຄືເຈົ້າສາວຈັດຕຽມໄວ້ສຳລັບເຈົ້າບ່າວ.

2. ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 21:9-27
   ກ. ນັກວິທະຍາສາດທີ່ສລາດບໍ່ຮູ້ເຣື່ອງນີ້ ແຕ່ພຣະເຈົ້າຊົງໂຜດປະທານໃຫ້ຄຣິສຕຽນເຂົ້າໃຈໃນເຣື່ອງນີ້.
   ຂ. ເຢຣູຊາເລັມໃໝ່ເປັນແຜ່ນດິນທີ່ສວຍງາມແລະປາສຈາກມົນທິນ.
   ຄ. ນະຄອນນັ້ນບໍ່ມີກາງຄືນ, ບໍ່ຕ້ອງການແສງອາທິດແລະດວງຈັນ ເພາະພຣະເມສານ້ອຍເປັນໂຄມໄຟ.
   ງ. ຄົນທີ່ເຮັດການຊົ່ວມົວໝອງຈະເຂົ້າໄປແຜ່ດິນນັ້ນບໍ່ໄດ້, ນອກຈາກຜູ້ຈົດທະບຽນແປວ່າເຊື່ອໃນພຣະເມສານ້ອຍຈຶ່ງຈະເຂົ້າໄປໄດ້.

3. ຂໍໃຫ້ຜູ້ນຶ່ງອ່ານ ພຣະນິມິດ 22:1-21

ກ. ເມື່ອຕົ້ນເດີມພຣະເຈົ້າສ້າງມະນຸດແລະໃຊ້ຊີວິດທີ່ສວນເອເດນ ແລະເຣື່ອງຂອງມະນຸດກໍຈົບລົງທີ່ສວນ.
ຂ. ໃນນະຄອນນັ້ນມີຕົ້ນໄມ້ 12 ເດືອນ ແລະ 12 ຊະນິດ ໃບຂອງຕົ້ນໄມ້ກໍເປັນຢາປົວພະຍາດ.
ຄ. ໂຢຮັນເກືອບຈະຂາບນະມັສການເທວະດາ ແຕ່ເທວະດາບອກເພິ່ນວ່າເປັນຜູ້ຮັບໃຊ້ເໝືອນກັນ, ເຮົາທັງຫລາຍກໍຈະທຽບເທົ່າເທວະດາເໝືອນກັນເມື່ອວັນນັ້ນມາເຖິງ.
ງ. ພຣະເຢຊູຊົງເປີດເຜີຍຕົນເອງວ່າເພິ່ນເປັນເຊື້ອສາຍຂອງກະສັດດາວິດທີ່ເກີດໃນເມືອງເບັດເລເຮັມ.
ຈ. ເທວະດາບອກໃຫ້ໂຢຮັນບັນທຶກສິ່ງທີ່ເຫັນ ແລ້ວໃຫ້ເປີດບັນທຶກນັ້ນໄວ້ເພື່ອໃຫ້ທຸກຄົນອ່ານເອງ.
ສ. ຫ້າມບໍ່ໃຫ້ຊັກຊວນໃຫ້ຄົນຊົ່ວເຊື່ອພຣະເຈົ້າອີກ ແຕ່ໃຫ້ເຂົາອ່ານບັນທຶກແລ້ວໃຫ້ເຂົາກັບໃຈເອງ.
ຊ. ໂຢຮັນສັ່ງຫ້າມບໍ່ໃຫ້ຜູ້ໃດເພີ້ມເຕີມຫລືຕັດຂໍ້ໃດອອກ ຫາກຂືນເຮັດພຣະເຈົ້າຈະຕອບສນອງຜູ້ນັ້ນຢ່າງດຽວກັນ.
ຍ. ຜູ້ເທສນາ, ຜູ້ສອນພຣະທັມ ແລະຜູ້ປະຕິບັດພຣະທັມຄວນຣະມັດຣະວັງໃນການເທສນາຫລືສອນຫລືການປະຕິບັດໃຫ້ຖືກຕ້ອງ.
ດ. ພຣະເຢຊູບອກວ່າພຣະອົງຈະສະເດັດມາໄວໆ ແຕ່ເຮົາບໍ່ຮູ້ວ່າໄວເທົ່າໃດ? ໜ້າທີ່ຂອງເຮົາຄືປັບປຸງຕົວເຮົາເອງກ່ອນໜ້າພຣະອົງຈະສະເດັດມາ.

<u>ຄໍາຖາມ:</u>

1. ບ່ອນສວຍງາມໃດທີ່ທ່ານເຄີຍເຫັນມາກ່ອນ?

2. ໂອກາດດີທີ່ສຸດເຮັດໃຫ້ທ່ານເປັນສຸກໃຈມາກ່ອນນີ້ແມ່ນໂອກາດໃດ?

3. ທ່ານຄິດວ່າຄວາມສວຍງາມຂອງແຜ່ນດິນສວັນໃໝ່ຈະງາມປານໃດ ແລະທ່ານຈະສຸກໃຈເທົ່າໃດເມື່ອໄດ້ເຂົ້າໄປຢູ່?

4. ພຣະຄັມພີສອນເຮົາວ່າມີແຕ່ຄົນທີ່ຈົດທະບຽນນໍາພຣະເມສານ້ອຍເທົ່ານັ້ນຈະໄດ້ໄປ, ທ່ານລົງທະບຽນແທ້ແລ້ວບໍ່?

5. ຫາກທ່ານຍັງບໍ່ທັນລົງທະບຽນ ຫລືບໍ່ແນ່ໃຈວ່າພຣະເມສານ້ອຍບັນທຶກຊື່ຂອງທ່ານເທື່ອ ທ່ານຈະເຮັດແນວໃດໃນມື້ນີ້?

6. ຫາກທ່ານໄດ້ລົງທະບຽນຮຽບຮ້ອຍແລ້ວ ແຕ່ອ່ອນໃຈຕໍ່ບັນຫາຕ່າງໆວັນນີ້ທ່ານຈະຕັ້ງໃຈໃໝ່ແນວໃດ?